GCI

# ບົດທີ 1

# ການສ້າງສາວົກ

ອາລຳພະບົດ

### ຈຸດປະສົງຂອງບົດຮຽນ

- ເພື່ອໃຫ້ເຂົ້າໃຈຄວາມໝາຍຄຳວ່າ ສາວົກ
- ເພື່ອໃຫ້ເຂົ້າໃຈເຖິງການຊົງເອີ້ນໃນການເປັນສາວົກ
- ເພື່ອໃຫ້ຮູ້ເຖິງກຸນແຈສຳຄັນທີ່ເຮັດໃຫ້ຈະເລີນຂຶ້ນໃນການເປັນສາວົກ
- ເພື່ອໃຫ້ເກີດຜົນໃນການເປັນສາວົກ
- ເພື່ອໃຫ້ເຂົ້າໃຈເຖິງຫລັກການເຊິ່ງປະຕິບັດໃນການເປັນສາວົກ

## ໂຄງສ້າງບົດຮຽນ

1. ອາລຳພະບົດເລື່ອງການເປັນສາວົກ
   ກ. ຄວາມໝາຍ
   ຂ. ການຊົງເອີ້ນໃຫ້ເປັນສາວົກ
   ຄ. ເງື່ອນໄຂໃນການເປັນສາວົກ

2. ປະໂຫຍດຂອງການມີພັນທະກິດການສ້າງສາວົກ
   ກ. ຄຸນຄ່າຂອງການສ້າງສາວົກ ຕາມທີ່ພະເຢຊູຊົງສອນ
   ຂ. ຄຸນຄ່າຂອງການສ້າງສາວົກ
   ຄ. ຄຸນຄ່າຂອງການສ້າງສາວົກທີ່ມີຕໍ່ຜູ້ສ້າງສາວົກ
   ງ. ຄຸນຄ່າຂອງການສ້າງສາວົກທີ່ມີຕໍ່ຄຣິສະຕະຈັກ

3. ຂັ້ນຕອນ ແລະເປົ້າໝາຍຂອງການສ້າງສາວົກ
   ກ. ຂັ້ນຕອນ
   ຂ. ເປົ້າໝາຍ

4. ຄວາມຮູ້ພື້ນຖານສຳລັບສາວົກ
   ກ. ທຳຄວາມເຂົ້າໃຈເລື່ອງຂອງຄວາມບາບ
   ຂ. ທຳຄວາມເຂົ້າໃຈເລື່ອງການກັບໃຈໃຫມ່
   ຄ. ທຳຄວາມເຂົ້າໃຈເລື່ອງພະໂລຫິດ
   ງ. ທຳຄວາມເຂົ້າໃຈເລື່ອງຖານະແລະສິດທິຂອງຜູ້ເຊື່ອທີ່ມີໃນອົງພະຄຣິດ

5. ກຸນແຈສຳຄັນທີ່ເຮັດໃຫ້ຈະເລີນຂຶ້ນໃນການເປັນສາວົກ
   ກ. ສ້າງວິໄນໃຫ້ຕົນເອງເພື່ອຈັດເວລາໃນການເຂົ້າເຝົ້າພະເຈົ້າ
   ຂ. ການສັນລະເສີນແລະນະມັດສະການ
   ຄ. ພະວັດຈະນະ
   ງ. ການອະທິຖານ

GCI

6. ສາວົກກັບການເກີດຜົນ
   ກ. ການເກີດຜົນໃນສາມດ້ານ
   ຂ. ເງື່ອນໄຂທີ່ເຮັດໃຫ້ເກີດຜົນ
   ຄ. ສະຫລຸບ

7. ສາວົກ – ການທົດລອງ ແລະຄວາມທຸກຍາກ
   ກ. ສາວົກກັບການທົດລອງ
   ຂ. ສາວົກກັບຄວາມທຸກຍາກ

8. ຫລັກການເຊີງປະຕິບັດໃນການສ້າງສາວົກ
   ກ. ການເລືອກສາວົກທີ່ມີສັກກະຍະພາບ
   ຂ. ຫລັກການພື້ນຖານໃນການສ້າງສາວົກ
   ຄ. ການພົບປະກັບສາວົກຂອງທ່ານ
   ງ. ການກະຕຸ້ນສາວົກຂອງທ່ານ

GCI

## I. ອາລຳພະບົດເລື່ອງການເປັນສາວົກ

"ເຫດສະນັ້ນທ່ານທັງຫລາຍຈົ່ງອອກໄປ ຈົ່ງເຮັດໃຫ້ຄົນທຸກຊາດເປັນລູກສິດ ໃຫ້ເຂົາຮັບບັບຕິດສະມາໃນພະນາມແຫ່ງພະບິດາ ພະບຸດ ແລະພະວິນຍານບໍລິສຸດ ສັ່ງສອນເຂົາໃຫ້ຖືຮັກສາສາລະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ແລ້ວນັ້ນ ນີ້ແຫລະ, ເຮົາຢູ່ກັບທ່ານທັງຫລາຍທຸກໆວັນຈົນໝົດກັບ" ມັດທາຍ 28:19–20

## ກ. ຄວາມໝາຍ

1. ພາສາກຣີກທີ່ແປວ່າ ສາວົກຄື "ມາເທເລັດ" ( mathetes)

   ປາກົດໃນພະຄຳພີຂ່າວປະເສີດທັງສີ່ເຫລັ້ມ ແລະກິດຈະການລວມກັນ 264 ຄັ້ງ ມີຄວາມໝາຍວ່າ " ຜູ້ທີ່ຮຽນຮູ້ວິທີການຈາກຄົນອື່ນ"

   ກ) ສາວົກປຽບເໝືອນກັບເດັກຝຶກງານທີ່ຮຽນຮູ້ວິທີການທຳງານຈາກເຈົ້າຂອງຮ້ານຂອງເຂົາ

   ຂ) ເຂົາຍັງປຽບເໝືອນກັບ ນັກຮຽນທີ່ເຮັດຕາມຢ່າງຂອງອາຈານຂອງຕົນ

2. ລັກສະນະສຳຄັນຂອງຜູ້ທີ່ເປັນສາວົກ

   ກ) ສາວົກຄືຜູ້ທີ່ມີພະວັດຈະນະຂອງພະເຈົ້າເປັນສູນກາງໃນຊີວິດ

   ພະເຢຊູຊົງກ່າວຕໍ່ພວກຢິວທີ່ເຊື່ອຖືໃນພະອົງວ່າ "ຖ້າທ່ານທັງຫລາຍຕັ້ງໝັ້ນຄົງຢູ່ໃນຖ້ອຍຄຳຂອງເຮົາ ພວກທ່ານກໍເປັນສາວົກແທ້ຂອງເຮົາ" ໂຢຮັນ 8:31
   ຝ່າຍພະອົງຊົງຕອບວ່າ"ມີຄຳຂຽນໄວ້ໃນພະຄຳພີວ່າມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານສິ່ງດຽວ ແຕ່ລ້ຽງດ້ວຍພະທຳທຸກຂໍ້ທີ່ອອກມາຈາກພະໂອດຂອງພະເຈົ້າ" ມັດທາຍ 4:4

   ຂ) ສາວົກຄືຜູ້ທີ່ອຸທິດຕົວໃຫ້ແກ່ອົງພະເຢຊູຄຣິດເຈົ້າຢ່າງແທ້ຈິງ

   ພະອົງຈຶ່ງຊົງເອີ້ນປະຊາຊົນກັບພວກສາວົກເຂົ້າມາ ແລ້ວຊົງກ່າວແກ່ເຂົາວ່າ "ຖ້າຜູ້ໃດຢາກຕາມເຮົາມາ ໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽ ແລະຮັບແບກໄມ້ກາງແຂນຂອງຕົນຕິດຕາມເຮົາມາ" ມາຣະໂກ8:34

   (1) ເຂົາຍອມອຸທິດຕົວໃຫ້ແກ່ເຈົ້ານາຍຂອງຕົນຈົນຍອມສະຫລະຊີວິດຂອງຕົນໄດ້
   (2) ຄວາມທະເຍີທະຍານ
   (3) ຄວາມປາດຖະໜາສ່ວນຕົວ
   (4) ຄວາມຕັ້ງໃຈ

3. ສາວົກຄືຜູ້ທີ່ມີຄວາມສຳພັນໃກ້ສິດກັບຜູ້ເປັນເຈົ້ານາຍຂອງຕົນ

   "ຈົ່ງເຂົ້າສະນິດຢູ່ໃນເຮົາແລະເຮົາເຂົ້າສະນິດຢູ່ໃນພວກທ່ານ ກິ່ງຈະເກີດຜົນເອງບໍ່ໄດ້ນອກຈາກຈະຕິດຢູ່ໃນເຄືອສັນໃດ ທ່ານທັງຫລາຍກໍຈະເກີດຜົນບໍ່ໄດ້ນອກຈາກຈະເຂົ້າສະນິດຢູ່ໃນເຮົາສັນນັ້ນ ເຮົາເປັນເຄືອອະງຸ່ນທ່ານທັງຫລາຍເປັນກິ່ງ ຜູ້ທີ່ເຂົ້າສະນິດຢູ່ໃນເຮົາ ແລະເຮົາເຂົ້າສະນິດຢູ່ໃນຜູ້ນັ້ນແມ່ນຜູ້ນັ້ນແຫລະ ຈະເກີດຜົນຫລາຍ ເພາະຖ້ານອກຈາກເຮົາແລ້ວພວກທ່ານບໍ່ອາດເຮັດສິ່ງໃດໄດ້" ໂຢຮັນ 15:4–5

   ກ) ເຂົາໃກ້ສິດກັບເຈົ້ານາຍ ຈົນເກີດຜົນຊະນິດດຽວກັນ

GCI

ຂ) ເຂົາໄດ້ຮັບສິດທິພິເສດຈາກພະຜູ້ເປັນເຈົ້າທີ່ຈະໄດ້ຮັບການອະທິບາຍ ແລະການເປີດເຜີຍເພີ້ມຂື້ນ

" ແລະນອກຈາກຄຳອຸປະມາ ພະອົງບໍ່ໄດ້ຊົງກ່າວກັບເຂົາ ແຕ່ເມື່ອຫວ້າງຄົນແລ້ວ ຈຶ່ງຊົງອະທິບາຍສິ່ງສາລະພັດນັ້ນໃຫ້ແກ່ພວກເຂົາຟັງແຕ່ຈຳເພາະ" ມາຣະໂກ 4:34

4. ສາວົກ ຄວນມີຄວາມຮັກຂອງພະເຈົ້າຕໍ່ຄົນອື່ນໆ

"ເຮົາໃຫ້ບັນຍັດໃຫມ່ໄວ້ແກ່ເຈົ້າທັງຫລາຍ ຄືໃຫ້ພວກເຈົ້າຮັກກັນແລະກັນ ເຮົາຮັກເຈົ້າທັງຫລາຍມາແລ້ວຢ່າງໃດ ພວກເຈົ້າຈົ່ງຮັກກັນແລະກັນຢ່າງນັ້ນ" ໂຢຮັນ 13:34

ນີ້ບໍ່ແມ່ນຄວາມຮັກແບບມະນຸດ ຫລືຄວາມຮັກແບບຊູ້ສາວ ແຕ່ເປັນຄວາມຮັກແບບ "ອາຄາເປ" ຊຶ່ງເປັນຄວາມຮັກແບບພະເຈົ້າ ໂປໂລໄດ້ບັນລະຍາຍເຖິງລັກສະນະຂອງຄວາມຮັກແບບອາຄາເປໄວ້ໃນພະທຳ 1 ໂກຣິນໂທບົດທີ 13 ໄວ້ດັ່ງຕໍ່ໄປນີ້:

ຄວາມຮັກຂອງພະເຈົ້ານັ້ນ

ກ) ອົດທົນດົນນານ
ຂ) ກະທຳຄຸນໃຫ້
ຄ) ບໍ່ອິດສາ ຫລືລິດສະຫຍາ
ງ) ບໍ່ອວດຕົວ
ຈ) ບໍ່ຍິ່ງພະຫຍອງ
ສ) ບໍ່ຫຍາບຄາຍ
ຊ) ບໍ່ຄິດເຫັນແກ່ຕົນເອງຝ່າຍດຽວ
ຍ) ບໍ່ສຸນສຽວ
ດ) ບໍ່ຊ່າງຈົດຈຳຄວາມຜິດ
ຕ) ບໍ່ຊື່ນຊົມຍິນດີເມື່ອມີການປະພຶດຜິດ
ຖ) ແຕ່ຊື່ນຊົມຍິນດີເມື່ອປະພຶດຊອບ
ທ) ປົກປ້ອງຢູ່ສະເໝີ
ນ) ເຊື່ອໃນສ່ວນດີຂອງເຂົາຢູ່ສະເໝີ
ມ) ມີຄວາມຫວັງຢູ່ສະເໝີ
ບ) ມີຄວາມຫວັງຢູ່ສະເໝີ
ປ) ຄວາມຮັກບໍ່ມີວັນສູນສິ້ນ

## ຂ. ການຊົງເອີ້ນໃຫ້ເປັນສາວົກ

## 1. ສາວົກໄດ້ຮັບການຊົງເອີ້ນຈາກອົງພະເຢຊູເຈົ້າ

"ຂະນະທີ່ພະອົງສະເດັດລຽບຕາມທະເລສາບຄາລີເລ ກໍຊົງທອດພະເນດເຫັນອ້າຍນ້ອງສອງຄົນ ຄືຊີໂມນທີ່ເອີ້ນວ່າເປໂຕກັບອັນເດອານ້ອງຊາຍຂອງຕົນ ກຳລັງຖີ້ມມອງລົງນ້ຳທະເລເພາະວ່າເຂົາເປັນຊາວຫາປາ ເມື່ອພະອົງສະເດັດຕໍ່ໄປກໍທອດພະເນດເຫັນອ້າຍນ້ອງອີກສອງຄົນ ຄືຢາໂກໂບລູກເຊເບດາຍ ກັບໂຢຮັນນ້ອງຊາຍຂອງຕົນກຳລັງຝຸງມອງຢູ່ຢູ່ໃນເຮືອກັບເຊເບດາຍພໍ່ຂອງເຂົາ ພະອົງໄດ້ຊົງເອີ້ນເອົາເຂົາ" ມັດທາຍ 4:18,21

2. ເປັນກຽດຍິ່ງໃຫຍ່ທີ່ຈະໄດ້ຮັບການຊົງເອີ້ນຈາກພະເຢຊູ

3. ການຊົງເອີ້ນດັ່ງກ່າວນີ້ ເປັນການຊົງເອີ້ນເພື່ອໃຫ້ເຊື່ອຟັງ

"ເຫດສັນໃດທ່ານທັງຫລາຍຈຶ່ງເອີ້ນເຮົາວ່າ ນາຍ ນາຍ ແຕ່ບໍ່ໄດ້ເຮັດຕາມສິ່ງທີ່ເຮົາບອກນັ້ນ" ລູກາ6:46

GCI

ກ) ພະອົງຈຶ່ງຊົງຮ້ອງຮຽກປະຊາຊົນກັບເຫລົ່າສາວົກໃຫ້ເຂົ້າມາແລ້ວຊົງກ່າວແກ່ເຂົາວ່າ

"ຖ້າຜູ້ໃດຢາກຕາມເຮົາມາໃຫ້ຜູ້ນັ້ນຕັດສິດຂອງຕົນເສັຽ ແລະຮັບແບກໄມ້ກາງແຂນຂອງຕົນຕິດຕາມເຮົາມາ" ມາຣະໂກ 8:34

ຂ) ແຕ່ຊາມູເອນກ່າວວ່າ:

"ພະເຈົ້າຊົງພໍພະໄທໃນເຄື່ອງເຜົາບູຊາ ແລະເຄື່ອງສັດບູຊາຫລາຍ ເທົ່າກັບການທີ່ຈະເຊື່ອຟັງພະສຸລະສຽງຂອງພະອົງຫລື ເບິ່ງເຖີດທີ່ຈະເຊື່ອຟັງກໍດີກວ່າເຄື່ອງສັດບູຊາ ແລະຊຶ່ງຈະສະດັບຟັງກໍດີກວ່າໄຂມັນຂອງບັນດາແກະຜູ້" 1ຊາມູເອນ 15:22

4. ການຊົງເອີ້ນນີ້ເປັນການຊົງເອີ້ນເພື່ອບົວລະບັດຮັບໃຊ້

ກ) ພະເຢຊູຊົງເປັນເຈົ້ານາຍ ໄດ້ຊົງວາງແບບຢ່າງໃນການຮັບໃຊ້ໄວ້ແກ່ເຮົາແລ້ວ

"ເພາະບຸດມະນຸດນັ້ນບໍ່ໄດ້ມາໃຫ້ຄົນອື່ນບົວລະບັດຕົນ ແຕ່ມາເພື່ອບົວລະບັດເຂົາ ແລະປະທານຊີວິດຂອງຕົນໃຫ້ເປັນຄ່າໄຖ່ຄົນຈຳນວນຫລາຍ" ມາຣະໂກ10:45
ໂຢຮັນ13:5

5. ການຊົງເອີ້ນນີ້ເປັນການຊົງເອີ້ນໃຫ້ທົນຕໍ່ຄວາມທຸກ

ກ) ສາວົກຍຸກທຳອິດຕ່າງກໍຕ້ອງຜ່ານເວລາແຫ່ງຄວາມທຸກຍາກລຳບາກ

"ເພາະພະເຈົ້າໄດ້ຊົງໂຜດແກ່ເຈົ້າທັງຫລາຍເພາະເຫັນແກ່ພະຄຣິດ ບໍ່ແມ່ນໃຫ້ພວກເຈົ້າເຊື່ອແຕ່ໃນພະອົງເທົ່ານັ້ນ ແຕ່ໃຫ້ພວກເຈົ້າທົນຄວາມທຸກເພາະເຫັນແກ່ພະອົງດ້ວຍ" ຟີລິບປອຍ 1:29

ຂ) ພະຜູ້ເປັນເຈົ້າໄດ້ວາງແບບຢ່າງແກ່ເຮົາແລ້ວ

"ເພາະວ່າພະເຈົ້າໄດ້ຊົງເອີ້ນພວກທ່ານໄວ້ສຳລັບການນີ້ແຫລະ ເພາະພະຄຣິດກໍໄດ້ຊົງທົນທໍລະມານແທນທ່ານທັງຫລາຍເໝືອນກັນ ໂດຍໃຫ້ເປັນ ແບບຢ່າງແກ່ພວກທ່ານ ເພື່ອພວກທ່ານຈະໄດ້ຕິດຕາມຮອຍພະບາດຂອງພະອົງ" 1ເປໂຕ 2:21

ຄ. ເງື່ອນໄຂໃນການເປັນສາວົກ

1. ຄວາມສັດຊື່

ກ) ພະເຈົ້າຊົງເບິ່ງຄວາມສັດຊື່ໃນຊີວິດຂອງສາວົກຂອງພະອົງ

ຝ່າຍນາຍກໍຕອບວ່າ"ດີແລ້ວຂ້ອຍໃຊ້ຜູ້ດີແລະສັດຊື່ເອີຍ ເຈົ້າເປັນຜູ້ສັດຊື່ໃນຂອງເລັກນ້ອຍ ເຮົາຈະຕັ້ງໃຫ້ເຈົ້າເປັນຜູ້ເບິ່ງແຍງຂອງຫລາຍຢ່າງຈົ່ງເຂົ້າຮ່ວມຄວາມຍິນດີກັບນາຍເຈົ້າເທີ້ນ"
ມັດທາຍ 25:21

ຂ) ພະເຢຊູກ່າວໄວ້ໃນຄຳອຸປະມາເລື່ອງຜູ້ຫວ່ານພືດວ່າເປັນໄປໄດ້ທີ່ຜູ້ເຊື່ອໃນພະເຈົ້າແລ້ວຈະຫລົງຫາຍໄປ

ແຕ່ບໍ່ມີຮາກໃນຕົວເອງ ຈຶ່ງທົນຢູ່ຊົ່ວຄາວ ແລະເມື່ອເກີດຄວາມຍາກລຳບາກ ຫລືການຂົ່ມເຫງເພາະພະທຳນັ້ນ ຕົນກໍທໍ້ຖອຍໃຈທັນທີ ມາຣະໂກ4:17

GCI

ຄ) ໂມເຊແລະພະເຢຊູໄດ້ຖືກກ່າວຂານເຖິງວ່າເປັນຜູ້ທີ່ສັດຊື່

"ໃນຍາດວົງທັງໝົດອັນເປັນຄົວເຮືອນຂອງພະເຈົ້ານັ້ນ –ໂມເຊໄດ້ສັດຊື່ໃນຖານະເປັນຜູ້ຮັບໃຊ້ – ເພື່ອເປັນພະຍານໃນເລື່ອງຕ່າງໆ ຊຶ່ງພະເຈົ້າຈະຊົງກ່າວຕໍ່ໄປ ແຕ່ຝ່າຍພະຄຣິດກໍຊົງສັດຊື່ໃນຖານະເປັນພະບຸດຢູ່ເໜືອຍາດວົງ ອັນເປັນຄົວເຮືອນຂອງພະເຈົ້າ ແລະເຮົາທັງຫລາຍກໍເປັນຄົວເຮືອນນັ້ນແຫລະ,ຖ້າເຮົາຫາກຍຶດຖືເອົາຄວາມກ້າຫານແລະຄວາມພູມໃຈໃນຄວາມຫວັງນັ້ນໄວ້ໃຫ້ໝັ້ນຄົງຈົນເຖິງທີ່ສຸດ" ເຮັບເຣີ 3:5-6

2. ຕັ້ງພະເຈົ້າໄວ້ເປັນນຶ່ງໃນຊີວິດຂອງຕົນ

"ເຫດສັນນັ້ນຢ່າກະວົນກະວາຍເຖິງມື້ອື່ນເພາະວ່າມື້ອື່ນຍັງມີຄວາມກະວົນກະວາຍສຳລັບມັນເອງ ຄວາມທຸກ
ໃນວັນໃດກໍພໍແລ້ວໃນວັນນັ້ນ" ມັດທາຍ 6:34

3. ມີຄວາມຫິວກະຫາຍຝ່າຍວິນຍານ

ກ) ພະເຢຊູຊົງສັນຍາວ່າຜູ້ທີ່ຫິວກະຫາຍຝ່າຍວິນຍານຈະໄດ້ຮັບພະພອນ

"ບຸກຄົນຜູ້ໃດຫິວກະຫາຍຄວາມຊອບທຳ ຜູ້ນັ້ນເປັນສຸກ ເພາະວ່າພະເຈົ້າຈະຊົງໃຫ້ອີ່ມບໍລິບູນ" ມັດທາຍ 5:6

ຂ) ຕາມທຳມະຊາດ ຖ້າເດັກນ້ອຍຫິວ ເຂົາກໍຈະສົ່ງສຽງຮ້ອງໃຫ້ຈົນພໍ່ແມ່ປ້ອນອາຫານໃຫ້ເຂົາຕາມທີ່ຕ້ອງການນັ້ນກໍຄື ນ້ຳນົມ ນັ້ນເອງ ເດັກມີຄວາມຫິວໂຫຍຫານ້ຳນົມ ເຊັ່ນດຽວກັນ ເປໂຕໄດ້ກ່າວສັ່ງສອນໄວ້ວ່າຜູ້ເຊື່ອທຸກຄົນຕ້ອງມີໃຈທີ່ປາດຖະໜານ້ຳນົມຝ່າຍວິນຍານ

"ເຊັ່ນດຽວກັບເດັກນ້ອຍເກີດໃໝ່ ຈົ່ງປາດຖະໜານ້ຳນົມຝ່າຍວິນຍານອັນບໍລິສຸດ ເພື່ອໂດຍນ້ຳນົມນັ້ນຈະເຮັດໃຫ້ທ່ານທັງຫລາຍຈະເລີນຂຶ້ນສູ່ຄວາມພົ້ນ ເພາະທ່ານໄດ້ລີ້ມລົດພະກະລຸນາຄຸນຂອງພະຜູ້ເປັນເຈົ້າ" 1ເປໂຕ 2:2-3

4. ເປັນຜູ້ທີ່ມີວິນຍານນອບນ້ອມຍອມຟັງ ແລະພ້ອມທີ່ຈະຮັບຄຳສອນ

ກ) ດັ່ງທີ່ໄດ້ກ່າວໄປແລ້ວຂ້າງຕົ້ນວ່າ ສາວົກຄືຜູ້ທີ່ຮຽນຮູ້ ຊຶ່ງຖ້າເຂົາບໍ່ມີໃຈນອບນ້ອມຍອມຟັງ ແລະພ້ອມທີ່ຈະຮັບການສັ່ງສອນແລ້ວ ກໍຈະເປັນການຍາກຫລາຍທີ່ເຂົາຈະເຕີບໃຫຍ່ຂຶ້ນໃນພະເຈົ້າ

"ທ່ານທັງຫລາຍຈົ່ງຍອມຟັງການບັງຄັບບັນຊາທີ່ມະນຸດຕັ້ງໄວ້ທຸກຢ່າງເພາະເຫັນແກ່ພະຜູ້ເປັນເຈົ້າ ບໍ່ວ່າຜູ້ນັ້ນຈະເປັນມະຫາຈັກກະພັດຜູ້ມີອຳນາດ" 1ເປໂຕ2:13

ຂ) ມີຄຳພັງເພີຍຂໍ້ນຶ່ງກ່າວໄວ້ວ່າ"ຂ້ອຍກິນເກືອ ຫລາຍກວ່າທີ່ເຈົ້າກິນເຂົ້າເສັຽອີກ" ຄວາມໝາຍກໍຄືຂ້ອຍຢູ່ໃນໂລກມານານ ແລະມີປະສົບການຊີວິດຫລາຍກວ່າທ່ານ ຜູ້ທີ່ເປັນສາວົກຈະຕ້ອງບໍ່ມີທ່າທີແບບນີ້ ເຂົາຕ້ອງເປັນຜູ້ທີ່ພ້ອມຈະຮຽນຮູ້ຈາກຜູ້ອື່ນ ຜູ້ທີ່ສະຫລາດຍ່ອມຮຽນຮູ້ຈາກຄົນອື່ນ

"ທັງນັກປາດຈະໄດ້ຍິນ ແລະເພີ່ມພູນການຮຽນຮູ້ ແລະຄົນທີ່ມີຄວາມເຂົ້າໃຈຈະໄດ້ຄວາມຊຳນານ" ສຸພາສິດ 1:5

II. ປະໂຫຍດຂອງການມີພັນທະກິດການສ້າງສາວົກ

GCI

ກ. ຄຸນຄ່າຂອງການສ້າງສາວົກ ຕາມທີ່ພະເຢຊູຊົງສອນ

ພະເຢຊູໄດ້ຊົງໃຫ້ສຳຄັນສູງສຸດແກ່ການສ້າງສາວົກ "ພະເຢຊູຊົງທຸ້ມເທເວລາກັບສາວົກຂອງພະອົງຫລາຍກວ່າກັບຄົນອື່ນໆ ເຮົາຕ້ອງສະຫລຸບເອົາວ່າພະອົງກຳລັງດຳເນີນການຕາມຍຸດທະວິທີທີ່ໄດ້ຊົງໄຕ່ຕອງເປັນຢ່າງດີແລ້ວດ້ວຍຄວາມລະມັດລະວັງ" (ໂຣເບີດ ໂຄແມນ, "ແຜນການຫລັກໃນການປະກາດພະກິດຕິຄຸນ") ນີ້ເປັນເຫດການທີ່ເກີດຂຶ້ນເປັນປົກກະຕິໃນພັນທະກິດຂອງພະອົງ ວິທີການຂອງພະເຢຊູນັ້ນຄືມະນຸດ ຜູ້ຊຶ່ງພະອົງໄດ້ຊົງຝຶກຝົນໄວ້ແລ້ວເພື່ອໃຫ້ສານຕໍ່ພະລາຊະກິດຂອງພະອົງ ໃນພະທຳມັດທາຍ 28:19-20 ເຮົາໄດ້ເຫັນເຖິງການພະເຢຊູຊົງສັ່ງມອບໜ້າທີ່ຮັບຜິດຊອບຂອງພະອົງໃຫ້ແກ່ເດັກຝຶກງານຂອງພະອົງ

"ເຫດສັນນັ້ນທ່ານທັງຫລາຍຈົ່ງອອກໄປເຮັດໃຫ້ຄົນທຸກຊາດເປັນລູກສິດໃຫ້ເຂົາຮັບບັບຕິດສະມາໃນພະນາມແຫ່ງພະບິດາ ພະບຸດ ແລະພະວິນຍານບໍລິສຸດ ສອນເຂົາໃຫ້ຖືຮັກສາສິ່ງສາລະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ ນີ້ແຫລະເຮົາຈະຢູ່ກັບເຈົ້າທັງຫລາຍສະເໝີໄປ ຈົນກວ່າຈະສິ້ນຍຸກ"

ຈົ່ງສ້າງສາວົກ ສັ່ງສອນເຂົາ ທຸ້ມເທຊີວິດຂອງທ່ານໃຫ້ແກ່ຄົນກຸ່ມນ້ອຍໆ ຈັກກຸ່ມນຶ່ງ ນີ້ຄືວິທີການດຽວກັນກັບທີ່ໂປໂລຝຶກຝົນຕີໂມທຽວ

"ຈົ່ງມອບຄຳສອນເຫລົ່ານັ້ນ ຊຶ່ງທ່ານໄດ້ຍິນຈາກຂ້າພະເຈົ້າຕໍ່ໜ້າພະຍານຫລາຍຄົນ ໄວ້ກັບຄົນທີ່ຊື່ສັດທີ່ສາມາດສອນຄົນອື່ນໄດ້ດ້ວຍ" 2ຕີໂມທຽວ2:2

ຄຸນຄ່າແຫ່ງການສ້າງສາວົກຂອງພະເຢຊູ ໄດ້ສະທ້ອນອອກມາໃນພັນທະກິດຂອງທ່ານຫລືບໍ່? ທ່ານກຳລັງ"ດຳເນີນຊີວິດຢ່າງທີ່ພະອົງຊົງດຳເນີນ"ຢູ່ຫລືບໍ່? (1ໂຢຮັນ2:6) ຈົ່ງຈື່ໄວ້ວ່າ ພະເຢຊູໄດ້ຊົງເລີ້ມພະລາຊະກິດຂອງພະອົງ ແລະມັນໄດ້ເສັດສິ້ນໄປແລ້ວ ທ່ານຮັກພະເຢຊູຫລາຍພໍທີ່ຈະຖືເອົາສິ່ງທີ່ພະອົງຊົງສົນພະໄທມາເປັນສິ່ງທີ່ທ່ານສົນໃຈດ້ວຍຫລືບໍ່?

ຂ. ຄຸນຄ່າຂອງການສ້າງສາວົກ

ຄຣິສຕຽນຫລາຍຄົນມີຊີວິດຢູ່ຢ່າງຄົນທີ່ບໍ່ໄດ້ເປັນຜູ້ໃຫຍ່ ແຕ່ກໍບໍ່ມີໃຜຄ່ອຍສົນໃຈທີ່ຈະຊ່ວຍໃຫ້ເຂົາເຕີບໃຫຍ່ຂຶ້ນໃນພະຄຣິດ ເຮົາຈະເຮັດໃຫ້ເດັກນ້ອຍຝ່າຍວິນຍານໃນເມືອງຂອງເຮົາເວົ້າຢ່າງນີ້ໄດ້ບໍ່ "ຂອບພະຄຸນພະເຈົ້າສຳລັບຄົນນັ້ນ ຫລືຄົນນີ້ທີ່ເອົາໃຈໃສ່ຄອຍຊ່ວຍເຫລືອໃຫ້ຂ້າພະອົງເຕີບໃຫຍ່ຂຶ້ນໃນພະຄຣິດ"

1. ການສ້າງສາວົກຊ່ວຍເພີ້ມພູນອັດຕາການຈະເລີນເຕີບໃຫຍ່ຝ່າຍວິນຍານຂອງຜູ້ທີ່ເປັນສາວົກ

2. ການສ້າງສາວົກຊ່ວຍຫຍຸດຢັ້ງຮູບແບບພຶດຕິກຳທີ່ຜິດໆແລະສະໜັບສະໜູນພຶດຕິກຳທີ່ຖືກຕ້ອງ ເຊັ່ນດຽວ ກັບ ຜູ້ ຝຶກສອນກິລາທີ່ດີຍ່ອມຊ່ວຍຝຶກສອນນັກກິລາຂອງຕົນ

3. ການສ້າງສາວົກຈະຊ່ວຍປົກປ້ອງຜູ້ເປັນສາວົກຈາກການໂຈມຕີຂອງສັດຕູ ຊາຕານຈະຄອຍຫລອກລວງ ແລະເຮັດໃຫ້ຄຣິສຕຽນໃໝ່ທໍ້ໃຈໃນຂະນະທີ່ເຂົາກຳລັງຕໍ່ສູ້ກັບຄວາມບາບໃນຊີວິດຂອງເຂົາ ຜູ້ທີ່ສ້າງສາວົກຈະຊ່ວຍໃຫ້ຄຣິສຕຽນໃໝ່ໄດ້ "ສວມໃສ່ຍຸດທະພັນທັງຊຸດຂອງພະເຈົ້າ"

4. ການສ້າງສາວົກ ຊ່ວຍໃຫ້ຜູ້ເປັນສາວົກມີເພື່ອນສະໜິດເປັນສ່ວນຕົວ ຜູ້ທີ່ຮັບເຊື່ອໃໝ່ ມັກຈະຮູ້ສຶກຖືກປະຖິ້ມແລະເຫງົາໃນຊີວິດໃໝ່ຝ່າຍວິນຍານ ຫລາຍຄັ້ງເຂົາຈະເຊົາຫລີ້ນກັບເພື່ອນຊາວໂລກ ແລະກໍຖືກເພື່ອນຊາວໂລກເລີກຫລີ້ນກັບເຂົາ ຜູ້ທີ່ຮັບເຊື່ອໃໝ່ຈຶ່ງຕ້ອງການເພື່ອນສະໜິດທີ່ຄອຍໃຫ້ກຳລັງໃຈເຂົາ

5. ການສ້າງສາວົກຊ່ວຍໃຫ້ຜູ້ເປັນສາວົກມີທີ່ປຶກສາ ຜູ້ຮັບເຊື່ອໃໝ່ອາດຈະມີຄຳຖາມເລື້ອຍໆໃນຄຳສອນຂອງພະຄຳພີຫລາຍຕອນ ແລະເຂົາກໍຈຳເປັນທີ່ຈະ ຕ້ອງຕັດສິນໃຈຫລາຍໆເລື່ອງໃນວິຖີຊີວິດໃໝ່ ບາງທີອາດຈະເປັນເລື່ອງຂອງກິດຈະກຳບາງຢ່າງຊຶ່ງ ເຂົາບໍ່ແນ່ໃຈວ່າຄວນເຮັດຫລືບໍ່ຄຣິສຕຽນທີ່ເປັນຜູ້ໃຫຍ່ໃນພະເຈົ້າສາມາດທີ່ຈະໃຫ້ຂໍ້ຄິດ ແລະຄຳແນະນຳ ທີ່ມີປັນຍາແກ່ເຂົາໄດ້ຜູ້ທີ່ສ້າງສາວົກຈະຕ້ອງລະວັງ ແລະຫລີກລ້ຽງການຄິດໃນແງ່ລົບ ຫລືການມັກຕັດ ສິນຜູ້ເຊື່ອໃໝ່ຜູ້ສ້າງສາ

GCI

ວົກຈະຕ້ອງເປັນຜູ້ທີ່ເຂົ້າໃຈຄຣິສຕຽນໃຫມ່ໃຫ້ຫລາຍໆ ໃນຂະນະທີ່ເຂົາກຳລັງ ດຳເນີນຊີວິດໃຫມ່ກັບພະເຈົ້າ

ຄ. ຄຸນຄ່າຂອງການສ້າງສາວົກທີ່ມີຕໍ່ຜູ້ສ້າງສາວົກ

ພະເຢຊູກ່າວວ່າ"ຈົ່ງໃຫ້ແລະທ່ານຈະໄດ້ຮັບຕອບ...ດ້ວຍທະນານຖ້ອນຍັດສັ່ນແໜ້ນພູນລົ້ນໃສ່ໃຫ້" (ລູກາ6:38)ຕໍ່ໄປນີ້ເປັນສິ່ງຊົດເຊີຍທີ່ເຮົາຈະໄດ້ຮັບຈາກການທຸ້ມເວລາ ຄວາມຫວ່ງໃຍ ການອະທິຖານ – ແລະເຫື່ອແຮງໃນການສ້າງຜູ້ອື່ນໃຫ້ເປັນສາວົກໃນພະຄຣິດ

1. ການສ້າງສາວົກນຳມາຊຶ່ງຄວາມຍິນດີແກ່ຜູ້ສ້າງສາວົກ

   ອັກຄະທູດໂຢຮັນ(3ໂຢຮັນ4) ໄດ້ກ່າວໄວ້ວ່າ "ນີ້ຄືສິ່ງທີ່ເຮັດໃຫ້ຂ້າພະເຈົ້າຍິນດີເປັນຢ່າງຍິ່ງ ຄືເມື່ອໄດ້ເຫັນລູກໆຂອງຂ້າພະເຈົ້າດຳເນີນຊີວິດໃນສັດຈະ"

   ອັກຄະທູດໂປໂລ ກໍຮູ້ເຖິງຄວາມຍິນດີອັນນີ້ດ້ວຍ " ເພາະອັນນໍຈະເປັນຄວາມຫວັງ ຫລືຄວາມຊື່ນຊົມຍິນດີ ຫລືສິ່ງພູມໃຈ ຈຳເພາະພະພັກພະເຢຊູຄຣິດເຈົ້າ ເມື່ອພະອົງຈະສະເດັດມາ ກໍບໍ່ແມ່ນທ່ານທັງຫລາຍດອກຫລື ເພາະວ່າທ່ານທັງຫລາຍເປັນສັກສີ ແລະຄວາມຊື່ນຊົມຍິນດີຂອງເຮົາ" 1ເທຊະໂລນີກ 2:19–20

   "ເຮົາຈະຂອບພະຄຸນພະເຈົ້າເພາະທ່ານຢ່າງໃດອີກຈຶ່ງຈະເໝາະ ສຳລັບຄວາມຊື່ນຊົມຍິນດີຊຶ່ງເຮົາມີຢູ່ເພາະທ່ານ ຈຳເພາະພະພັກພະເຈົ້າຂອງເຮົາ" 1 ເທຊະໂລນີກ 3:9

2. ການສ້າງສາວົກ ຊ່ວຍຊຳລະໃຫ້ຊີວິດຂອງຜູ້ສ້າງສາວົກສະອາດຍິ່ງຂຶ້ນ

3. ຜູ້ສ້າງສາວົກ ຈະຕ້ອງແນ່ໃຈວ່າແບບຢ່າງການປະພຶດຂອງຕົນ ຄືສິ່ງທີ່ໜ້າປະພຶດຕາມ ເຮົາອາດປະຫລາດໃຈເປັນຢ່າງຍິ່ງທີ່ໄດ້ຮຽນຮູ້ຈັກຕົນເອງໃນຂະນະທີ່ກຳລັງຈິດຈໍ່ຢູ່ກັບຊີວິດຂອງຄົນນຶ່ງຢູ່ ຊີວິດເຮົາຈະບໍລິສຸດຂຶ້ນເມື່ອເຮົາຕັ້ງເປົ້າທີ່ຈະປະພຶດຕົວເປັນແບບຢ່າງໃຫ້ແກ່ຄົນອື່ນ ຄົນເຮົາຈະເຕີບໃຫຍ່ຂຶ້ນໄດ້ເມື່ອເຮົາລົງມືປົນນິບັດຮັບໃຊ້

4. ການສ້າງສາວົກຈະຊ່ວຍພັດທະນາທັກສະໃນການເຮັດພັນທະກິດ ເຮົາຈະໄດ້ຮັບການຝຶກຝົນໃນຂະນະທີ່ຕົນເອງສັ່ງສອນໃຫ້ຄຳປຶກສາ ແລະແນະນຳຄົນອື່ນ ຜູ້ສ້າງສາວົກອາດຈຳເປັນຕ້ອງນຳກຸ່ມອະທິບາຍ ກິດຈະກຳຕ່າງໆເຫລົ່ານີ້ຍ່ອມຊ່ວຍພັດທະນາທັກສະໃນການເປັນຜູ້ນຳຂອງເຮົາໃຫ້ດີຂຶ້ນ

5. ການສ້າງສາວົກເຮັດໃຫ້ຜູ້ສ້າງສາວົກມີຊ່ອງທາງລະບາຍພະພອນໄປສູ່ຜູ້ອື່ນ ຄຣິສຕຽນທີ່ສ້າງສາວົກຍ່ອມບໍ່ເປັນຜູ້ເຊື່ອທີ່ມີຊີວິດເໝືອນແອ່ງນ້ຳເນົ່າອີກຕໍ່ໄປ ເພາະເຂົາຈະຊ່ວຍຖ່າຍທອດສິ່ງທີ່ຕົນເອງຮູ້ໄປສູ່ຜູ້ອື່ນ ສິ່ງນີ້ຈະເຮັດໃຫ້ເຂົາມີຊີວິດທີ່ສົດຊື່ນຢູ່ໃນພະວິນຍານສະເໝີ

ງ. ຄຸນຄ່າຂອງການສ້າງສາວົກທີ່ມີຕໍ່ຄຣິສຕະຈັກ

1. ການສ້າງສາວົກຈະຊ່ວຍອະນຸລັກຄວາມພຽນພະຍາຍາມໃນການປະກາດພະກິດຕິຄຸນໃນພະກາຍຂອງພະຄຣິດ

2. ຊ່ວຍພັດທະນາຜູ້ນຳທີ່ຮັກພະເຈົ້າຂຶ້ນໃນຄຣິສຕະຈັກ ຜູ້ທີ່ໄດ້ຮັບການຝຶກຝົນໃຫ້ເປັນສາວົກຈະຈະເລີນ –ແລະເປັນປະໂຫຍດຕໍ່ຄຣິສຕະຈັກໄດ້ຫລາຍຂຶ້ນ ໂດຍວິທີການນີ້ ພະເຈົ້າກໍຊົງສາມາດທີ່ຈະດຳເນີນພະລາຊະກິດຂອງພະອົງກັບຊົນລຸ້ນໃຫມ່ໃນອານາຄົດໄດ້ຕໍ່ໄປເລື້ອຍໆ

   ເຮົາໄດ້ຮັບຮູ້ຂ່າວເລື່ອງການຈະເລີນເຕີບໃຫຍ່ຢ່າງຫລວງຫລາຍຂອງຄຣິສຕະຈັກໃນເກົາຫລີໃຕ້ ແຕ່ມີນ້ອຍຄົນທີ່ຮູ້ເຖິງເລື່ອງທີ່ຄຣິສຕະຈັກເພດຊະໄບທີລຽນໃນຕອນຕົ້ນສັດຕະວັດທີ 20 ໄດ້ເຮັດ

GCI

ການຝຶກຝົນອົບຮົມຄາລະອາດເປັນໜື່ນໆຄົນໃນເລື່ອງການສ້າງສາວົກ ນັ້ນແຫລະຄືການສ້າງຮາກຖານທີ່ເຮັດໃຫ້ເກີດການຈະເລີນເຕີບໃຫຍ່ເປັນຢ່າງຫລາຍໃນພະກາຍຂອງພະຄຣິດບ່ອນນັ້ນໃນທຸກວັນນີ້

ຈ. ຄຸນຄ່າຂອງການສ້າງສາວົກທີ່ມີຕໍ່ໂລກ

"ພະມະຫາບັນຊາ" ຮຽກຮ້ອງໃຫ້ເຮົາຕ້ອງຄິດເຖິງຜູ້ຄົນທັງໂລກ ຄຣິສຕຽນທຸກຄົນຈະຕ້ອງຖາມຕົນເອງວ່າ "ຂ້າພະເຈົ້າຈະຕ້ອງເຮັດຢ່າງໃດແດ່ຈຶ່ງຈະສ້າງຜົນກະທົບຕໍ່ໂລກນີ້ໄດ້" ເຮົາຈະປ່ຽນແປງໂລກແຫ່ງຄວາມບາບນີ້ໄດ້ ກໍໂດຍການປ່ຽນຊີວິດຄົນເທື່ອລະຄົນເທົ່ານັ້ນ ການເຮັດງານກ່ຽວກັບຈິດວິນຍານຂອງຄົນ ຄືງານຮັບໃຊ້ອັນສູງສຸດທີ່ເຮົາຈະສາມາດເຮັດໄດ້ເພື່ອມະນຸດຊາດ

ມິດຊັນນາລີທີ່ມາຢ້ຽມຢາມເຮົາຄົນນຶ່ງເຄີຍກ່າວໄວ້ວ່າ "ຖ້າຂ້າພະເຈົ້າສາມາດກັບມາດຳເນີນຊີວິດຂອງຕົນເອງໄດ້ໃຫມ່ອີກຄັ້ງນຶ່ງ ຂ້າພະເຈົ້າຈະດຳເນີນຊີວິດຢູ່ເພື່ອປ່ຽນແປງຊີວິດຂອງຄົນບາງຄົນ ເພາະວ່າເຮົາບໍ່ສາມາດສ້າງການປ່ຽນແປງອັນໃດໄດ້ເລີຍ ຖ້າເຮົາບໍ່ໄດ້ປ່ຽນແປງຊີວິດຂອງຄົນອື່ນ"

III. ຂັ້ນຕອນ ແລະເປົ້າໝາຍຂອງການສ້າງສາວົກ

ການສ້າງສາວົກນັ້ນປະກອບດ້ວຍ 3 ຂັ້ນຕອນ

ກ. ຂັ້ນຕອນ

1. ຂັ້ນຕອນທີ່ນຶ່ງ: ການປະກາດພະກິດຕິຄຸນແກ່ຄົນອື່ນ

2ເປໂຕ 3:9 ກ່າວວ່າ "ພະອົງບໍ່ຊົງປະສົງທີ່ຈະໃຫ້ຜູ້ນຶ່ງຜູ້ໃດພິນາດເລີຍ"
ໂຢຮັນ 3:16 ເຕືອນເຮົາວ່າ "ພະເຈົ້າຊົງຮັກໂລກ..ເພື່ອທຸກຄົນທີ່ເຊື່ອໃນພະອົງຈະບໍ່ພິນາດ ແຕ່ມີຊີວິດອັນຕະຫລອດໄປເປັນນິດ"

ດັ່ງນັ້ນການເຮັດໃຫ້ຄົນຮັບເຊື່ອ ແລະບັງເກີດໃຫມ່ຢ່າງແທ້ຈິງນັ້ນແຫລະ ຄືເປົ້າໝາຍທຳອິດຂອງການສ້າງສາວົກ ແຕ່ວ່ານັ້ນບໍ່ແມ່ນຈຸດສິ້ນສຸດໃນຕົວມັນເອງ ມັນເປັນຂັ້ນຕອນທີ່ນຳໄປສູ່ຂັ້ນຕໍ່ໆໄປ

2. ຂັ້ນຕອນທີ່ສອງ: ການເສີມສ້າງຜູ້ເຊື່ອໃຫມ່

ໃນໜັງສືກິດຈະການ ເຮົາໄດ້ເຫັນອັກຄະສາວົກປະກາດພະກິດຕິຄຸນ ແລະເຮັດການສ້າງສາວົກ ໂປໂລກັບບາລານາບັດໄດ້ວາງແບບຢ່າງໄວ້ໂດຍການມີສ່ວນໃນການເສີມສ້າງຜູ້ເຊື່ອໃຫມ່ ເຮົາໄດ້ເຫັນເຂົາທຳການ "ເສີມກຳລັງພວກສາວົກ ແລະໜູນໃຈພວກເຂົາໃຫ້ໝັ້ນຄົງໃນຄວາມເຊື່ອ"

ພະເຢຊູກ່າວວ່າ (ມັດທາຍ 28:20) "ສອນເຂົາໃຫ້ຖືຮັກສາສິ່ງສາລະພັດຊຶ່ງເຮົາໄດ້ສັ່ງພວກເຈົ້າໄວ້ນີ້ແຫລະເຮົາຈະຢູ່ກັບເຈົ້າທັງຫລາຍສະເໝີໄປ ຈົນກວ່າຈະສິ້ນຍຸກ" ໂປໂລກ່າວເຖິງ "ລູກທີ່ຮັກທັງຫລາຍ" ຂອງທ່ານ ຊຶ່ງທ່ານໄດ້ "ເຈັບປວດເພາະພວກເຂົາອີກ ຈົນກວ່າພະຄຣິດຈະໄດ້ຊົງກໍ່ຮ່າງຂຶ້ນໃນພວກເຂົາ" (ຄາລາເຕັຽ 4:19) ການເຕີບໃຫຍ່ເປັນຜູ້ໃຫຍ່ຝ່າຍວິນຍານຄືລະດັບເຄິ່ງກາງໃນການສ້າງສາວົກ

3. ຂັ້ນຕອນທີ່ສາມ: ການເສີມສ້າງຜູ້ເຊື່ອ

ການຮັບຄວາມພົ້ນ ແລະການເປັນຜູ້ໃຫຍ່ຍັງບໍ່ແມ່ນສິ່ງທີ່ພຽງພໍ ພະເຈົ້າຊົງປະສົງໃຫ້ເຮົາເປັນຜູ້ເພີ່ມພູນຄົນໃນຝ່າຍວິນຍານດ້ວຍ ພະເຢຊູໄດ້ກ່າວໄວ້ຊັດເຈນໃນພະທຳໂຢຮັນ 15:16 ແລະໂຢຮັນ20:21 ວ່າ "ພະບິດາຊົງໃຊ້ເຮົາມາສັນໃດ ເຮົາກໍໃຊ້ທ່ານທັງຫລາຍໄປສັນນັ້ນ"

GCI

ເຮົາອາດຍົກຕົວຢ່າງເພື່ອໃຫ້ເຫັນພາບຊັດເຈນຂຶ້ນຄື ຂັ້ນຕອນທີ່ນຶ່ງ ຄືການກໍາເນີດຂອງເດັກ ຂັ້ນຕອນທີ່ສອງຄືການບໍາລຸງລ້ຽງເດັກໃຫ້ເປັນຜູ້ໃຫຍ່ ສ່ວນຂັ້ນທີ່ສາມຄືເວລາທີ່ເຂົາເຕີບໃຫຍ່ເປັນຜູ້ໃຫຍ່ພໍທີ່ຈະມີລູກ ແລະລ້ຽງດູລູກຂອງເຂົາເອງ

ຂ. ເປົ້າໝາຍ

ເປົ້າໝາຍຂອງເຮົາຄືການເຮັດໃຫ້ສາວົກບັນລຸສູ່ຄວາມເປັນຜູ້ໃຫຍ່ ແລະຊ່ວຍໃຫ້ເຂົາເປັນຜູ້ຂະຫຍາຍພົງພັນດ້ວຍຕົວຂອງເຂົາເອງ ຈົນມີຜູ້ເຊື່ອເປັນຄົນຝ່າຍວິນຍານໃນລຸ້ນທີ່ສາມ

1. ເປົ້າໝາຍທີ່ນຶ່ງ – ໄດ້ຄົນທີ່ເຕີບໃຫຍ່ເປັນຜູ້ໃຫຍ່

ອັກຄະສາວົກໂປໂລມີເປົ້າໝາຍໃນການເຮັດໃຫ້ຜູ້ເຊື່ອໃໝ່ໄດ້ເຕີບໃຫຍ່ຂຶ້ນ ທ່ານກ່າວໄວ້ວ່າ "ພະອົງນັ້ນແຫລະເຮົາປະກາດຢູ່ ໂດຍເຕືອນສະຕິທຸກຄົນ ແລະສັ່ງສອນທຸກຄົນໃຫ້ມີສະຕິປັນຍາທຸກຢ່າງ ເພື່ອຈະໄດ້ຖວາຍທຸກຄົນໃຫ້ເປັນຜູ້ໃຫຍ່ແລ້ວໃນພະຄຣິດ" ໂກໂລຊາຍ 1:28

ຄໍາວ່າ "ເປັນຜູ້ໃຫຍ່" ໃນພະຄໍາພີໃໝ່ໝາຍເຖິງ "ຄົບຖ້ວນ" ຈາກຄໍາກຣີກວ່າ "ເທເລອີອອສ" ຊຶ່ງໝາຍເຖິງການໄດ້ຮັບການຝຶກອົບຮົມຢ່າງຄົບຖ້ວນທຸກດ້ານ ໄດ້ຮັບການຈັດຕຽມຈົນຄົບ ເປັນຜູ້ໃຫຍ່

ໃນເອເຟໂຊ 4:13 ຄໍານີ້ແປວ່າ "ເປັນຜູ້ໃຫຍ່" "..ຈົນກວ່າເຮົາທຸກຄົນຈະບັນລຸເຖິງຄວາມເປັນນໍ້ານຶ່ງໃຈດຽວກັນໃນຄວາມເຊື່ອ ແລະໃນຄວາມຮູ້ເຖິງພະບຸດຂອງພະເຈົ້າ ຈົນກວ່າເຮົາຈະເຕີບໃຫຍ່ເປັນຜູ້ໃຫຍ່ເຕັມທີ່ ຄືເຕັມເຖິງຂະໜາດຄວາມໄພບູນຂອງພະຄຣິດ"

ຄຣິສຕຽນທີ່ເປັນຜູ້ໃຫຍ່ແລ້ວມີຄຸນສົມບັດຢ່າງໃດແດ່?

ກ. ມີບຸກຄະລິກລັກສະນະເໝືອນພະຄຣິດ

ຄາລາເຕັຽ 5:22-23 –ເຮັດໃຫ້ເຮົາເຫັນເຖິງຄຸນລັກສະນະຫລາຍປະການທີ່ໄດ້ສໍາແດງໃນຊີວິດຂອງພະຄຣິດເຮົາເອີ້ນລັກສະນະເຫລົ່ານີ້ວ່າ "ຜົນຂອງພະວິນຍານ" ຄຣິສຕຽນທີ່ເຂົ້າສະນິດຢູ່ໃນເຄືອອະງຸ່ນແທ້ຈະສໍາແດງຄຸນລັກສະນະເຫລົ່ານີ້ດ້ວຍເຊັ່ນກັນ (ໂຢຮັນ15:5)

ຂ. ເພິ່ງພາໃນພະຄຣິດ

ໃນມິຕິຝ່າຍວິນຍານນັ້ນ ເຮົາຈະສັງເກດເຫັນຄວາມເປັນຜູ້ໃຫຍ່ໄດ້ໂດຍການປ່ຽນແປງຈາກສະພາບຂອງຄົນທີ່ບໍ່ເພິ່ງພາພະເຈົ້າໄປສູ່ການເປັນຄົນທີ່ເພິ່ງພາໃນພະເຈົ້າ

ອັບລາຮາມຮຽນຮູ້ທີ່ຈະໄວ້ວາງໃຈພະເຈົ້າຫລາຍຂຶ້ນເລື້ອຍໆ (ໂຣມ4:20) ເມື່ອທ່ານມີຊີວິດເປັນຜູ້ໃຫຍ່ຫລາຍຂຶ້ນ –ໂປໂລໄດ້ກ່າວເຖິງຄວາມຈະເລີນເຕີບໃຫຍ່ຂອງທ່ານໃນພະຄຣິດ ໃນຄາລາເຕັຽ 2:20 "ຂ້າພະເຈົ້າເອງບໍ່ມີຊີວິດຢູ່ຕໍ່ໄປ ແຕ່ພະຄຣິດຕ່າງຫາກທີ່ຊົງມີຊີວິດຢູ່ໃນຂ້າພະເຈົ້າ"

ໂປໂລປາດຖະໜາທີ່ຈະເປັນເໝືອນພະຄຣິດໃນ ຟີລິບປອຍ 3:10 "ຂ້າພະເຈົ້າຕ້ອງການຈະຮູ້ຈັກພະອົງ ແລະໄດ້ຮັບປະສົບການໃນລິດເດດ ເນື່ອງໃນການທີ່ພະອົງຊົງຄືນພະຊົນນັ້ນ ແລະຮ່ວມທຸກກັບພະອົງ ຄືຍອມຕັ້ງອາລົມຕາຍເໝືອນພະອົງ"
ການມີຊີວິດທີ່ເພິ່ງພາພະເຈົ້າເພີ່ມຂຶ້ນເລື້ອຍໆ ຄືເຄື່ອງໝາຍຂອງຄຣິສຕຽນທີ່ເປັນຜູ້ໃຫຍ່

ຄ. ບໍ່ເພິ່ງພາຄົນອື່ນ

ເມື່ອເຮົາເຕີບໃຫຍ່ຂຶ້ນໃນການເພິ່ງພາພະຄຣິດ ເຮົາກໍບໍ່ຈໍາເປັນເພິ່ງຄົນອື່ນຫລາຍເທົ່າທີ່ເຄີຍເປັນມາ ຄົນອື່ນໆມີຄວາມສໍາຄັນຕໍ່ພະຄຣິດໃນການດໍາເນີນກັບພະເຈົ້າຫລືບໍ່?

GCI

ພະເຢຊູນັ້ນຊົງເພິ່ງພາໃນພະບິດາ ແລະບໍ່ເພິ່ງພາຄົນອື່ນໆ

ໂປໂລເມື່ອພົບກັບຜູ້ນຳຄຣິສຕະຈັກໃນເມືອງເອເຟໂຊເປັນຄັ້ງສຸດທ້າຍ ໄດ້ກ່າວຄຳອຳລາພວກເຂົາວ່າ "ບັດນີ້ຂ້າພະເຈົ້າຝາກທ່ານໄວ້ກັບພະເຈົ້າ ແລະກັບຄຳແຫ່ງພະຄຸນຂອງພະອົງ" (ກິຈການ 20:32) ໂປໂລໄດ້ນຳຄົນເຫລົ່ານີ້ເຂົ້າສູ່ການມີຊີວິດທີ່ເພິ່ງພາພະຄຣິດ ແລະຝຶກຫັດພວກເຂົາໃຫ້ລະຈາກການທີ່ຕ້ອງເພິ່ງພາໃນທ່ານຫລາຍເກີນໄປ

ແຕ່ຄຣິສຕຽນທີ່ເມືອງໂກຣິນໂທ ໄດ້ເພິ່ງພາໃນຜູ້ນຳຝ່າຍວິນຍານຫລາຍຄົນ ຈົນຕ້ອງແຍກອອກຈາກກັນເປັນກຸ່ມໆ ໂປໂລຕ້ອງບອກວ່າພວກເຂົາຍັງເປັນຄົນທີ່ "ຢູ່ຝ່າຍໂລກ...ຍັງເປັນທາລົກໃນພະຄຣິດ" (1ໂກຣິນໂທ3:1)ທ່ານກ່າວວ່າຜູ້ນຳຝ່າຍວິນຍານຂອງພວກເຂົານັ້ນ ເປັນແຕ່ມະນຸດທຳມະດາ ຊຶ່ງເປັນຜູ້ຮັບໃຊ້ຂອງພະຄຣິດຜູ້ທີ່ຊ່ວຍພວກເຂົາໃຫ້ພົ້ນຄືພະເຢຊູ ບໍ່ແມ່ນຜູ້ຮັບໃຊ້ພະເຈົ້າ ໂປໂລກ່າວວ່າ "ບໍ່ມີໃຜສາມາດວາງຮາກອື່ນໄດ້ອີກແລ້ວ ນອກຈາກຮາກຖານດຽວທີ່ວາງໄວ້ແລ້ວນັ້ນຄື ອົງພະເຢຊູຄຣິດ" ໂປໂລກ່າວຕໍ່ໄປອີກວ່າ ການງານຂອງເຮົານັ້ນຈະປາກົດໃຫ້ເຫັນຕາມທີ່ເປັນຈິງ ເພາະຈະຕ້ອງຖືກທົດລອງດ້ວຍໄຟ ຖ້າເຮົາຍັງຄົງເພິ່ງພາໃນຄົນອື່ນ ເຮົາກຳລັງກໍ່ສ້າງເທິງຮາກຖານໂດຍໃຊ້ວັດສະດຸຄື ໄມ້ ຫຍ້າແຫ້ງ ແລະຟາງ ແຕ່ຖ້າເຮົາສ້າງຊີວິດເທິງພະວັດຈະນະເຮົາກຳລັງກໍ່ສ້າງໂດຍທອງຄຳ ເງິນ ແລະອັນຍະມະນີ ແລະເຮົາຈະໄດ້ຮັບບຳເໜັດຍິ່ງໃຫຍ່ເປັນນິດ

ງ. ເປັນຄົນທີ່ດຳເນີນຊີວິດຢ່າງຄົງເສັ້ນຄົງວາ

ພະເຢຊູໄດ້ຊົງວາງແບບໄວ້ວ່າ "ເຮົາເຮັດຕາມຊອບພະໄທພະອົງສະເໝີ" ໂຢຮັນ8:29 ການຄົງເສັ້ນຄົງວາໃນການດຳເນີນຊີວິດຄຣິສຕຽນ ໝາຍເຖິງ ການທີ່ເຮົາຍັງສາມາດມຸ້ງໜ້າໄປສູ່ການຈະເລີນເຕີບໃຫຍ່ໄດ້ໃນພາບລວມເຖິງແມ່ນວ່າຈະມີການສະດຸດຢູ່ເປັນບາງຄັ້ງບາງຄາວກໍຕາມ ມີບາງຄັ້ງທີ່ຄຣິສຕຽນລົ້ມລົງ ແຕ່ຄວາມປາດຖະໜາສູງສຸດຂອງເຂົາຈະປາກົດອອກມາເອງເມື່ອເຂົາຕັ້ງຕົ້ນໃຫມ່ອີກຄັ້ງ ແລະພະຍາຍາມດຳເນີນຊີວິດໃກ້ຊິດກັບພະຄຣິດຫລາຍຍິ່ງກວ່າເຄີຍເປັນມາ

ຈ. ມີຄວາມເຂົ້າໃຈໃນພະວັດຈະນະຂອງພະເຈົ້າຢ່າງຊັດເຈນ

ເມື່ອເຮົາໃຫຍ່ຂຶ້ນເປັນຜູ້ໃຫຍ່ ເຮົາຈະເລີ້ມມີຄວາມຮູ້ເຖິງສັດຈະທຳໜັກແໜ້ນຂຶ້ນ ແລະສາມາດວິນິໄສຄຳສອນທຽມເທັດໄດ້ (ກິດຈະການ20:29–30, 2ໂກຣິນໂທ2:13–15, ໂກໂລຊາຍ2:8) ເມື່ອສາວົກຂອງເຮົາເຕີບໃຫຍ່ຂຶ້ນ ພວກເຂົາຈະ "...ບໍ່ເປັນເດັກອີກຕໍ່ໄປ ຖືກຊັດໄປຊັດມາ ແລະຫັນໄປເມົາດ້ວຍລົມປາກແຫ່ງຄຳສັ່ງສອນທຸກຢ່າງ ແລະດ້ວຍເລ້ກົນຂອງມະນຸດຕາມອຸບາຍອັນສະຫລາດອັນເປັນການລໍ້ລວງ" ເອເຟໂຊ 4:14

ອັກຄະສາວົກໂຢຮັນໄດ້ຂຽນພະຄຳພີໜັກແໜ້ນຫລາຍ (1ໂຢຮັນ2:27) "ແລະຝ່າຍທ່ານທັງຫລາຍການເຈີມຊຶ່ງທ່ານທັງຫາຍໄດ້ຮັບຈາກພະອົງນັ້ນດຳລົງຢູ່ກັບທ່ານ ແລະບໍ່ຈຳເປັນຕ້ອງມີໃຜສອນທ່ານທັງຫລາຍ ເພາະວ່າການເຈີນັ້ນໄດ້ສອນທ່ານໃຫ້ຮູ້ທຸກສິ່ງ ແລະເປັນຄວາມຈິງ ແລະບໍ່ແມ່ນຄວາມຕົວະ ການເຈີມນັ້ນສອນທ່ານທັງຫລາຍແລ້ວຢ່າງໃດ ທ່ານຈົ່ງຕັ້ງໝັ້ນຄົງຢູ່ກັບພະອົງຢ່າງນັ້ນ" ໂຢຮັນໄດ້ຂຽນໜັງສືສະບັບນີ້ໄປຍັງຜູ້ເຊື່ອທຸກຄົນຊຶ່ງກຳລັງດຳເນີນຊີວິດຢູ່ໃນຄວາມສະຫວ່າງ(1ໂຢຮັນ2:1)ໂຢຮັນບໍ່ໄດ້ໝາຍເຖິງວ່າຄຣິສຕຽນເຮົາບໍ່ຈຳເປັນຕ້ອງມີວິນຍານທີ່ພ້ອມຮັບຄຳສອນ ແຕ່ທ່ານໝາຍເຖິງວ່າ ຜູ້ເຊື່ອເຫລົ່ານີ້ໄດ້ຮັບການຊົງເຈີມພິເສດຊຶ່ງເປັນເຄື່ອງກວດສອບຊຶ່ງຢູ່ພາຍໃນວິນຍານ ຊຶ່ງເຮັດໃຫ້ສຳພັດໄດ້ເວລາທີ່ໄດ້ຍິນເຖິງຄຳສອນປອມ ໂດຍບໍ່ຈຳເປັນຕ້ອງໃຫ້ໃຜມາບອກກໍໄດ້

ໂຢຮັນບອກເຖິງເຫດຜົນທີ່ເຮົາຕ້ອງວິນິໄສໃຫ້ໄດ້ວ່າຄຳສອນໃດເປັນຄຳສອນປອມ ເຮົາຕ້ອງພິສູດວ່າວິນຍານນັ້ນໆມາຈາກພະເຈົ້າຫລືບໍ່ ເພາະມີຜູ້ເຜີຍພະວັດຈະນະປອມຢ່າງມາກມາຍຈາຣິກໄປໃນໂລກ ວິທີທີ່ເຮົາຈະພິສູດເບິ່ງວ່າວິນຍານໃດມາຈາກພະເຈົ້າຫລືບໍ່ຄື "ວິນຍານທັງປວງທີ່ຍອມ

GCI

ຮັບວ່າພະເຢຊູຄຣິດໄດ້ສະເດັດມາເປັນມະນຸດວິນຍານນັ້ນກໍມາຈາກພະເຈົ້າ ແລະວິນຍານທັງປວງທີ່ບໍ່ຍອມຮັບເຊື່ອພະເຢຊູ ວິນຍານນັ້ນກໍບໍ່ໄດ້ມາຈາກພະເຈົ້າວິນຍານນັ້ນແຫລະເປັນປໍລະປັກຂອງພະຄຣິດ ຊຶ່ງທ່ານທັງຫລາຍໄດ້ຍິນວ່າຈະມາ ແລະບັດນີ້ກໍຢູ່ໃນໂລກແລ້ວ” (1ໂຢຮັນ4:1-3)

2. ເປົ້າໝາຍທີ່ສອງ – ໄດ້ຄົນຊຶ່ງເປັນຜູ້ທະວີຄູນ

“ຜູ້ທະວີຄູນ” ຄືຜູ້ທີ່ສາມາດຂະຫຍາຍຊີວິດຕົນເອງໄປສູ່ຄົນອື່ນ ຊຶ່ງເປັນຄົນທີ່ຈະຂະຫຍາຍຊີວິດຂອງເຂົາໄປສູ່ຄົນອື່ນໄດ້ອີກຕໍ່ນຶ່ງ ເປັນພົງພັນຝ່າຍວິນຍານໃນລຸ້ນທີ່ສາມ

ໂປໂລກ່າວກັບຕີໂມທຽວ ລູກຝ່າຍວິນຍານຂອງທ່ານວ່າ “ຈົ່ງມອບຄໍາສອນເຫລົ່ານັ້ນ ຊຶ່ງທ່ານໄດ້ຍິນຈາກຂ້າພະເຈົ້າຕໍ່ໜ້າພະຍານຫລາຍຄົນ ໄວ້ກັບຄົນທີ່ຊື່ສັດທີ່ສາມາດສອນຄົນອື່ນໄດ້ດ້ວຍ” (2ຕີໂມທຽວ2:2) ລອງມາເບິ່ງຮູບປະກອບເພື່ອຄວາມເຂົ້າໃຈໃນເລື່ອງນີ້

ເລື່ອງຈິງຂອງຜູ້ທະວີຄູນ
ຄໍສັນ ທອດແມນ ຜູ້ກໍ່ຕັ້ງອົງການເນວິເກເຕີ ຝຶກອົບຮົມ ເລສ ສະເປນເຊີ ໃນຂະນະທີ່ທັງສອງຕ່າງກໍປະຈໍາການຢູ່ໃນລາຊະນາວີສະຫະລັດ ໃນຊ່ວງສົງຄາມໂລກຄັ້ງທີ່ສອງເອສ ສະເປນເຊີ ອົບຮົມຄົນອື່ນໆເປັນສາວົກຈາກນັ້ນສາວົກເຫລົ່ານັ້ນກໍຊ່ອຍແນະນໍາແນວທາງຝ່າຍວິນຍານແກ່ຄົນອື່ນຕໍ່ໄປອີກ ໃນທີ່ສຸດມີກຸ່ມອະທິຖານ –ແລະສຶກສາພະຄໍາພີເກີດຂຶ້ນທົ່ວໄປຕາມເຮືອລົບປະມານ 1000 ລໍາ ແລະຖານທັບເຮືອທົ່ວໂລກ ຈົນເອບບີໄອເລີ່ມໃຫ້ຄວາມສົນໃຈກັບການປະຊຸມທີ່ກໍາລັງເກີດຂຶ້ນຕາມທີ່ຕ່າງໆທົ່ວໄປ ຫລັງຈາກໃຊ້ເວລາ 90 ວັນໃນການສືບສວນກໍພົບວ່າຕົ້ນເຫດຂອງການປະຊຸມທັງໝົດນີ້ເກີດຂຶ້ນຈາກຊາຍຄົນນຶ່ງຄື ຄໍສັນ ທອດແມນ ນັ້ນຄືການທະວີຄູນ ນັ້ນຄືຈຸດກໍາເນີດຂອງພັນທະກິດການເປັນພະຍານຂອງກຸ່ມເນວິເຄເຕີ ທົ່ວໂລກ ການສ້າງສາວົກເປັນສິ່ງທີ່ໜ້າຕື່ນເຕັ້ນຢ່າງຍິ່ງ ແລະນໍາມາຊຶ່ງຄວາມອີ່ມອົກອີ່ມໃຈເປັນຢ່າງຍິ່ງ

ໃນກິດຈະການບົດທີ່ 2,3 ແລະ4 ເຮົາພົບວ່າພະເຈົ້າໄດ້ຊົງເພີ່ມຄົນເຂົ້າມາໃນຄຣິສຕະຈັກລຸ້ນທໍາອິດ ແຕ່ໃນບົດທີ່ 6ພະຄໍາພີກ່າວວ່າ ຈໍານວນຂອງສາວົກໄດ້ “ທະວີຂຶ້ນ” ເປັນຈໍານວນຫລາຍ ອັນໃດຄືສາເຫດຂອງການເຕີບໃຫຍ່ແບບລະເບີດແຕກຕົວຢ່າງນີ້? ຄໍາຕອບຄື ຜູ້ເຊື່ອໃໝ່ທຸກຄົນໄດ້ກາຍເປັນຄົນສ້າງສາວົກ ເປັນຜູ້ຝຶກອົບຮົມຄົນອື່ນ ພະເຢຊູໄດ້ເລົ່າເຖິງເລື່ອງເຊື້ອຂະໝົມປັງຊຶ່ງໃສ່ໄວ້ໃນແປ້ງ ຈົນມັນແຜ່ຈໍານວນຂຶ້ນຫລາຍພັນເທົ່າອີກດ້ວຍ ເຄັດລັບຂອງການຈະເລີນເຕີບໃຫຍ່ໃນພັນທະກິດການສ້າງສາວົກນັ້ນຄືການທີ່ພົງພັນໃນແຕ່ລະລຸ້ນທະວີຈໍານວນຂຶ້ນອີກເທົ່າຕົວ ນີ້ຄືການທະວີຄູນບໍ່ແມ່ນການເພີ້ມຈໍານວນ

IV. ຄວາມຮູ້ພື້ນຖານສໍາລັບສາວົກ

ກ. ທໍາຄວາມເຂົ້າໃຈເລື່ອງຂອງຄວາມບາບ

1. ຄໍາໃນພະຄໍາພີທີ່ແປວ່າ ຄວາມບາບ

GCI

ກ) ຮາມານເທັຽ – ຜິດເປົ້າໝາຍ ໂຣມ6:23
ຂ) ອະໂນເມັຽ – ໄຮ້ກົດໝາຍ ຫລືກະບົດ 2ໂກຣິນໂທ 6:1
ຄ) ມາຣາ – ມັກໂຕ້ຖຽງ ຫລືດື້ດຶງ ເພງສັນລະເສີນ 78:8

2. ຜົນຂອງຄວາມບາບ

ກ) ຄວາມບາບເຮັດໃຫ້ພະເຈົ້າເສັຽພະໄທ

ພະເຈົ້າຊົງເຫັນວ່າຄວາມຊົ່ວຊ້າຂອງມະນຸດມີຫລາຍເທິງແຜ່ນດິນ ແລະຊົງເຫັນວ່າເຄົ້າຄວາມ ຄິດໃນໃຈຂອງເຂົາລ້ວນເປັນເລື່ອງຮ້າຍສະເໝີໄປ ພະເຈົ້າຈຶ່ງເສັຽພະໄທທີ່ໄດ້ສ້າງມະນຸດໄວ້ ເທິງແຜ່ນດິນແລະໂທມັດພະເຈົ້າຈຶ່ງກ່າວວ່າ "ເຮົາຈະກວາດສ້າງມະນຸດທີ່ເຮົາໄດ້ສ້າງມານີ້ໄປ ເສັຽຈາກແຜ່ນດິນທັງມະນຸດສັດກັບບັນດາສັດເລືອຄານ ແລະນົກໃນອາກາດດ້ວຍເພາະວ່າເຮົາ ເສັຽໃຈທີ່ໄດ້ສ້າງມາ (ປະຖົມມະການ 6:5–7)

ຂ) ຄວາມບາບເຮັດໃຫ້ມະນຸດຮູ້ສຶກຜິດ

ເພາະຂ້າພະອົງຮູ້ເຖິງການລະເມີດຂອງຂ້າພະອົງແລ້ວ ແລະບາບຂອງຂ້າພະອົງຢູ່ຕໍ່ໜ້າ ຂ້າພະ ອົງສະເໝີຂ້າພະອົງໄດ້ເຮັດບາບຕໍ່ພະອົງຕໍ່ພະອົງເທົ່ານັ້ນ ແລະໄດ້ເຮັດສິ່ງຊົ່ວຮ້າຍໃນສາຍພະ ເນດພະອົງ ທັງນີ້ເພື່ອພະອົງຈະຊົງຍຸດຕິທຳໃນຄຳພິພາກສາ ແລະໄຮ້ຕຳນິໃນການພິພາກສານັ້ນ (ເພງສັນລະເສີນ51:3–4)

ຄ) ຄວາມບາບແຍກມະນຸດອອກຈາກພະເຈົ້າ

ເບິ່ງເຖີດ ພະຫັດຂອງພະເຈົ້າບໍ່ໄດ້ສັ້ນລົງ ທີ່ຈະຊ່ວຍໃຫ້ພົ້ນບໍ່ໄດ້ ຫລືພະກອນຕຶງ ຊຶ່ງຈະບໍ່ຊົງໄດ້ ຍິນແຕ່ວ່າຄວາມບາບຊົ່ວຂອງເຈົ້າທັງຫລາຍໄດ້ເຮັດໃຫ້ເກີດການແຍກ ລະຫວ່າງເຈົ້າກັບພະເຈົ້າ ຂອງເຈົ້າ ແລະບາບຂອງເຈົ້າທັງຫລາຍໄດ້ບັງພະພັກຂອງພະອົງເສັຽຈາກເຈົ້າ ພະອົງຈຶ່ງບໍ່ໄດ້ ຍິນ (ເອຊາຢາ59:1-2)

ງ) ຄວາມບາບເຮັດໃຫ້ເກີດຄວາມມືດບອດຝ່າຍວິນຍານ

ສ່ວນຄົນທີ່ບໍ່ເຊື່ອນັ້ນພະຂອງຍຸກນີ້ໄດ້ກະທຳໃຈຂອງເຂົາໃຫ້ມືດໄປ ເພື່ອບໍ່ໃຫ້ເຂົາໄດ້ເຫັນຄວາມ ສະຫວ່າງຂອງຂ່າວປະເສີດເລື່ອງພະສີຣິຂອງພະຄຣິດຜູ້ເປັນພະສາຍາຂອງພະເຈົ້າ (2ໂກຣິນ ໂທ4:4)

ຈ) ຄວາມບາບເຮັດໃຫ້ເກີດຄວາມເສື່ອມ

ສຳລັບຄົນບໍລິສຸດນັ້ນທຸກສິ່ງກໍບໍລິສຸດແຕ່ສຳລັບຄົນຊົ່ວຊ້າ ແລະຄົນທີ່ໄຮ້ຄວາມເຊື່ອນັ້ນກໍບໍ່ມີສິ່ງ ໃດບໍລິສຸດເລີຍ ແຕ່ຈິດໃຈ ແລະຈິດສຳນຶກຜິດຊອບຂອງເຂົາກໍເສື່ອມຊາມໄປ (ຕີໂຕ1:15)

ສ) ຄວາມບາບເຮັດໃຫ້ເກີດຄວາມຕາຍຝ່າຍວິນຍານ

ພະອົງຊົງກະທຳໃຫ້ທ່ານທັງຫລາຍມີຊີວິດຢູ່ ແມ່ນວ່າທ່ານຕາຍແລ້ວໂດຍການລະເມີດ ແລະ ການບາບ (ເອເຟໂຊ 2:1)

ຂ. ທຳຄວາມເຂົ້າໃຈເລື່ອງການກັບໃຈໃໝ່

GCI

ມີບາງຄັ້ງທີ່ຜູ້ເຊື່ອຕ້ອງການຮັບພະພອນເລື່ອງສຸຂະພາບ ແລະຄວາມມັ່ງຄັ່ງ ແຕ່ບໍ່ເຂົ້າໃຈວ່າເຂົາຈຳເປັນຕ້ອງກັບໃຈ ເສັຽໃຫມ່

1. ຄວາມໝາຍຂອງຄຳ
   ກ) ຄຳກຣີກທີ່ແປວ່າ ການກັບໃຈໃຫມ່ຄື "ເມທານເອີຍ" ຊຶ່ງໝາຍເຖິງການປ່ຽນເສັ້ນທາງ ຫລືການ ມີຈິດໃຈ ອີກຢ່າງນຶ່ງ
   ຂ) ການກັບໃຈໃຫມ່ໝາຍເຖິງຜູ້ເຊື່ອຈະຕ້ອງປ່ຽນການຄິດ ແລະການກະທຳຂອງຕົນ
   ຄ) ການກັບໃຈໃຫມ່ ຕ້ອງກ່ຽວຂ້ອງທັງອາລົມ ແລະເຈດຕະນາ
   ເມື່ອດາວິດກັບໃຈຈາກຄວາມບາບຂອງທ່ານ ທ່ານຮູ້ສຶກເສັຽໃຈ ແລະໂສກເສົ້າຢ່າງລຶກຊຶ້ງ
   ຂໍຊົງເບືອນພະພັກພະອົງຈາກບາບທັງຫລາຍຂອງຂ້າພະອົງເສັຽ ແລະຊົງລົບບັນດາຄວາມບາບຜິດ ຂອງຂ້າພະອົງໃຫ້ສິ້ນ(ເພງສັນລະເສີນ51:9)

ຄ. ທຳຄວາມເຂົ້າໃຈເລື່ອງພະໂລຫິດຂອງພະເຢຊູ

1. ລິດເດດແຫ່ງພະໂລຫິດຂອງພະເຢຊູ
   ກ)ພະໂລຫິດຂອງພະເຢຊູ ເຮັດໃຫ້ເຮົາໄດ້ຮັບການໄຖ່ຈາກອຳນາດຂອງຊາຕານ

   ໃນພະເຢຊູນັ້ນເຮົາໄດ້ຮັບການໄຖ່ບາບໂດຍພະໂລຫິດຂອງພະອົງ ຄືໄດ້ຮັບການອະໄພໂທດບາບຂອງ ເຮົາໂດຍພະກະລຸນາອັນອຸດົມຂອງພະອົງ (ເອເຟໂຊ1:7)
   ຂ) ເຮົາໄດ້ຮັບການອະໄພໂທດບາບ

   ຖ້າເຮົາສາລະພາບບາບຂອງເຮົາພະອົງຊົງສັດຊື່ແລະທ່ຽງທຳກໍຈະຊົງໂປດຍົກບາບຂອງເຮົາ ແລະຈະ ຊົງຊຳລະເຮົາໃຫ້ພົ້ນ ຈາກການອະທຳທັງສິ້ນ 1ໂຢຮັນ 1:9

   ຄ) ເຮົາໄດ້ຮັບການຊົງຊຳລະໃຫ້ບໍລິສຸດໃຫ້ເປັນຜູ້ຊອບທຳ ຊຶ່ງໝາຍເຖິງເຮົາເປັນຜູ້ຊອບທຳເໝືອນກັບເປັນຜູ້ ທີ່ບໍ່ເຄີຍເຮັດບາບມາກ່ອນ

   ເພາະເຫດນັ້ນເມື່ອເຮົາເປັນຄົນຊອບທຳແລ້ວໂດຍພະໂລຫິດຂອງພະອົງ ຍິ່ງກວ່ານັ້ນເຮົາຈະພົ້ນຈາກພະ ອາຍາຂອງພະເຈົ້າໂດຍພະອົງ ໂຣມ 5:9

   ງ) ເຮົາສາມາດເຂົ້າມາເຝົ້າພະເຈົ້າໄດ້ໃນຍາມທີ່ມີຄວາມຕ້ອງການ

   ເຫດສະນັ້ນພີ່ນ້ອງທັງຫລາຍເມື່ອເຮົາມີໃຈກ້າທີ່ຈະເຂົ້າໄປສູ່ສະຖານສັກສິດໂດຍພະໂລຫິດຂອງພະເຢຊູ ຕາມທາງໃຫມ່ແລະເປັນທາງທີ່ມີຊີວິດ ຊຶ່ງພະອົງໄດ້ຊົງເປີດອອກໃຫ້ເຮົາຜ່ານເຂົ້າໄປທາງມ່ານນັ້ນ ຄືທາງພະກາຍຂອງພະອົງ ເຮັບເລີ 10:19–20

   ຈ) ເຮົາມີໄຊຊະນະ

   ເຂົາເຫລົ່ານັ້ນຊະນະພະຍາມານດ້ວຍພະໂລຫິດຂອງພະເມສານ້ອຍ ແລະເພາະຄຳພະຍານຂອງພວກເຂົາ ເອງ ເພາະເຂົາບໍ່ໄດ້ເສັຽດາຍທີ່ຈະພີຊີບຂອງຕົນ ພະນິມິດ 12:11

ງ. ທຳຄວາມເຂົ້າໃຈເລື່ອງຖານະ ແລະສິດທິຂອງຜູ້ເຊື່ອທີ່ມີໃນອົງພະຄຣິດ

1. ຜູ້ເຊື່ອຄືບຸດຂອງພະເຈົ້າ ແລະເປັນຜູ້ທີ່ຄືນດີກັບພະເຈົ້າແລ້ວ

   ແຕ່ສ່ວນບັນດາຜູ້ທີ່ຕ້ອນຮັບພະອົງຄືຜູ້ທີ່ເຊື່ອໃນພະນາມຂອງພະອົງ ພະອົງກໍຊົງປະທານສິດທິ ໃຫ້ເປັນບຸດຂອງພະ ເຈົ້າ ໂຢຮັນ 1:12
   ເພາະວ່າຖ້າຂະນະທີ່ເຮົາຍັງເປັນສັດຕູຕໍ່ພະເຈົ້າເຮົາໄດ້ກັບຄືນດີກັບພະອົງ ໂດຍທີ່ພະບຸດຂອງພະອົງສິ້ນພະຊົນຍິ່ງ ກວ່ານັ້ນອີກເມື່ອເຮົາກັບຄືນດີແລ້ວ ເຮົາກໍຈະພົ້ນໂດຍພະຊົນຂອງພະອົງ ໂຣມ 5:10

GCI

2. ຜູ້ເຊື່ອກາຍເປັນວິຫານຂອງພະວິນຍານບໍລິສຸດ

ທ່ານບໍ່ຮູ້ຫລືວ່າ ຮ່າງກາຍຂອງທ່ານເປັນວິຫານຂອງພະວິນຍານບໍລິສຸດຊຶ່ງສະຖິດຢູ່ໃນທ່ານ ຊຶ່ງທ່ານໄດ້ຮັບຈາກ ພະເຈົ້າ ທ່ານບໍ່ແມ່ນເຈົ້າຂອງຕົວທ່ານເອງ 1ໂກຣິນໂທ 6:19

3. ຜູ້ເຊື່ອຄືທາຍາດຮ່ວມກັນກັບພະຄຣິດ

ແລະຖ້າເຮົາທັງຫລາຍເປັນບຸດແລ້ວເຮົາກໍເປັນທາຍາດຄືເປັນທາຍາດຂອງພະເຈົ້າ ແລະເປັນທາຍາດຮ່ວມກັບ ພະຄຣິດເມື່ອເຮົາທັງຫລາຍທົນທຸກທໍລະມານດ້ວຍກັນກັບພະອົງນັ້ນ ກໍເພື່ອເຮົາທັງຫລາຍຈະໄດ້ສັກສີດ້ວຍກັນ ກັບພະອົງ ໂຣມ8:17

4. ຜູ້ເຊື່ອຖືກຊຸບໃຫ້ເປັນຂຶ້ນມາຈາກຄວາມຕາຍເພື່ອນັ່ງກັບພະຄຣິດໃນສະຫວັນສະຖານ

ແລະພະອົງຊົງໃຫ້ເຮົາເປັນຂຶ້ນມາກັບພະອົງ ແລະຊົງໂປດໃຫ້ເຮົານັ່ງໃນສະຫວັນສະຖານກັບພະເຢຊູຄຣິດ ເອເຟໂຊ2:6

5. ຜູ້ເຊື່ອມີໄຊຊະນະໃນອົງພະຄຣິດຍິ່ງກວ່າຜູ້ພິຊິດ

ແຕ່ວ່າໃນເຫດການທັງປວງເຫລົ່ານີ້ ເຮົາມີໄຊເຫລືອລົ້ນໂດຍພະອົງຜູ້ໄດ້ຊົງຮັກເຮົາທັງຫລາຍ ໂຣມ8:37

6. ຜູ້ເຊື່ອເປັນຜູ້ທີ່ໄຊຊະນະໂລກ

ເພາະທຸກຄົນທີ່ເກີດຈາກພະເຈົ້າກໍມີໄຊຕໍ່ໂລກ ແລະຄວາມເຊື່ອຂອງເຮົານີ້ແຫລະເປັນໄຊຊະນະທີ່ຊະນະໂລກ ໃຜນໍຊະນະໂລກບໍ່ແມ່ນຄົນອື່ນ ຄືຜູ້ທີ່ເຊື່ອວ່າພະເຢຊູຊົງເປັນພະບຸດຂອງພະເຈົ້ານັ້ນເອງ 1ໂຢຮັນ5:4-5

7. ຜູ້ເຊື່ອຄືທູດຂອງພະຄຣິດ

ສະນັ້ນເຮົາຈຶ່ງເປັນທູດຂອງພະຄຣິດໂດຍທີ່ພະເຈົ້າຊົງຂໍຮ້ອງທ່ານທັງຫລາຍທາງເຮົາ ເຮົາຈຶ່ງຈະຮ້ອງທ່ານໃນ ນາມຂອງພະຄຣິດໃຫ້ຄືນດີກັນກັບພະເຈົ້າ 2ໂກຣິນໂທ 5:20

V. ກຸນແຈສຳຄັນທີ່ເຮັດໃຫ້ຈະເລີນຂຶ້ນໃນການເປັນສາວົກ

ກ. ສ້າງວິໄນໃຫ້ຕົນເອງເພື່ອຈັດເວລາໃນການເຂົ້າເຝົ້າພະເຈົ້າ

1. ພະເຢຊູຈັດເວລາເພື່ອເຂົ້າເຝົ້າພະເຈົ້າ
   ຄັນເວລາເຊົ້າມືດພະອົງໄດ້ຊົງລຸກຂຶ້ນສະເດັດອອກໄປຍັງບ່ອນປ່ຽວ ແລະຊົງອະທິຖານບ່ອນນັ້ນ ມາຣະໂກ 1:35
2. ກໍານົດເວລາທີ່ແນ່ນອນໃນການພົບປະກັບພະເຈົ້າ

   ເມື່ອດານຽນຮູ້ວ່າລົງພະນາມໃນໜັງສືສຳຄັນນັ້ນແລ້ວ ທ່ານກໍໄປຍັງເຮືອນຂອງທ່ານ ທີ່ມີໜ້າຕ່າງຫ້ອງຊັ້ນ ເທິງຂອງທ່ານເປີດຊື່ກົງເຢລູຊາເລັມ ແລະທ່ານກໍຄຸເຂົ່າລົງວັນລະສາມຄັ້ງອະທິຖານ ແລະໂມທະນາພະຄຸນ ຕໍ່ພະເຈົ້າຂອງທ່ານ ດັ່ງທີ່ທ່ານໄດ້ເຄີຍກະທໍາມາແຕ່ກ່ອນ ດານຽນ 6:10

3. ການໃຊ້ເວລາກັບພະເຈົ້າປະກອບດ້ວຍການນະມັດສະການ ການສຶກສາພະວັດຈະນະ ແລະການອະທິຖານ

   ຂ້າແດ່ທ່ານຜູ້ຊອບທໍາ ຈົ່ງປິຕິຍິນດີໃນພະເຈົ້າການສັນລະເສີນນັ້ນຄວນແກ່ຄົນທ່ຽງທໍາ

GCI

ເພັງສັນລະເສີນ 33:1

ພະວັດຈະນະຂອງພະອົງເປັນໂຄມສຳລັບຕີນຂອງຂ້າພະອົງ ແລະເປັນຄວາມສະຫວ່າງແກ່ທາງຂອງຂ້າພະ ອົງ ເພັງສັນລະເສີນ119:105

ຈົ່ງຊື່ນຊົມຍິນດີໃນຄວາມຫວັງ ຈົ່ງອົດທົນຕໍ່ຄວາມບາບ ຈົ່ງຂະມັກຂະເໝັ້ນອະທິຖານ ໂຣມ 12:12

ຂ. ສາວົກກັບການສັນລະເສີນ ແລະນະມັດສະການ

*ການສັນລະເສີນຄືການຂອບພະຄຸນພະອົງໃນສິ່ງທີ່ພະອົງກະທຳເພື່ອເຮົາ*
*ການນະມັດສະການຄືການເທີດທູນພະອົງຕາມທີ່ພະອົງຊົງເປັນຢູ່*

1. ພະເຈົ້າຊົງສະແຫວງຫາຜູ້ທີ່ນະມັດສະການຢ່າງແທ້ຈິງ

ພະເຈົ້າຊົງເປັນພະວິນຍານ ແລະຜູ້ທີ່ນະມັດສະການພະອົງຕ້ອງນະມັດສະການດ້ວຍຈິດວິນຍານ ແລະຄວາມຈິງ ໂຢຮັນ 4:24

2. ພະເຈົ້າຊົງປະທັບເໜືອຄຳສັນລະເສີນຂອງປະຊາກອນຂອງພະອົງ

ເຖິງຢ່າງໃດພະອົງຊົງເປັນອົງບໍລິສຸດ ພະອົງປະທັບເໜືອຄຳສັນລະເສີນຂອງຄົນອິດສະລະເອນ ເພັງສັນລະເສີນ22:3

3. ພະເຈົ້າຊົງສົມຄວນຮັບຄຳສັນເສີນ ແລະນະມັດສະການຈາກເຮົາ

ແລະເຂົາທັງຫລາຍກໍຮ້ອງເພັງໃຫມ່ ວ່າດັ່ງນີ້
"ພະອົງຊົງເປັນຜູ້ທີ່ສົມຄວນຈະຊົງຮັບມ້ວນໜັງສືແລະແກະຕາມ້ວນໜັງສືນັ້ນອອກ ເພາະວ່າພະອົງຊົງຖືກ ປົງພະຊົນແລ້ວ ແລະດ້ວຍພະໂລຫິດຂອງພະອົງນັ້ນ ພະອົງໄດ້ຊົງໄຖ່ຄົນທຸກເຜົ່າ ທຸກພາສາ ທຸກຊາດ ແລະທຸກປະເທດເພື່ອຖວາຍແດ່ພະເຈົ້າພະອົງໄດ້ຊົງໂປດໃຫ້ເຂົາເປັນລາຊອານາຈັກ ແລະເປັນປະໂລຫິດ ຂອງພະເຈົ້າຂອງເຮົາ ແລະພວກເຂົາຈະໄດ້ຄອບຄອງແຜ່ນດິນໂລກ"

ແລ້ວຂ້າພະເຈົ້າກໍເບິ່ງ ແລະຂ້າພະເຈົ້າໄດ້ຍິນສຽງທູດສະຫວັນເປັນຈຳນວນຫລາຍເປັນໝື່ນໆເປັນແສນໆ ຊຶ່ງຢູ່ລ້ອມຮອບພະທີ່ນັ່ງຮອບສັດ ແລະຜູ້ອາວຸໂສທັງຫລາຍນັ້ນ ຮ້ອງສຽງດັ່ງວ່າ

"ພະເມສານ້ອຍຜູ້ຊົງຖືກປົງພະຊົນແລ້ວນັ້ນ ເປັນຜູ້ທີ່ສົມຄວນໄດ້ຮັບລິດເດດ ຊັບສົມບັດ ບັນຫາ ອານຸພາບ ກຽດ ພະສີຣິ ແລະຄຳສັນລະເສີນ" ແລະຂ້າພະເຈົ້າໄດ້ຍິນສຽງສິ່ງມີຊີວິດທັງໝົດ ທັງໃນສະຫວັນ ໃນແຜ່ນດິນໂລກ ໃຕ້ແຜ່ນດິນໃນມະຫາສະມຸດບັນດາທີ່ຢູ່ໃນບ່ອນເຫລົ່ານັ້ນ ຮ້ອງວ່າ

"ຂໍໃຫ້ຄຳສັນລະເສີນແລະກຽດ ແລະພະສີຣິແລະລິດເດດ ຈົ່ງມີແກ່ພະອົງຜູ້ປະທັບເທິງພະທີ່ນັ່ງ ແລະແກ່ພະເມສານ້ອຍຕະຫລອດໄປເປັນນິດ" ແລະສັດທັງສີ່ນັ້ນກໍຮ້ອງວ່າ "ອາແມນ" ແລະຜູ້ອາວຸໂສເຫລົ່ານັ້ນກໍໝູບຕົວລົງກາບນະມັດສະການ ພະນິມິດ 5:9-14

4. ການສັນລະເສີນ ແລະນະມັດສະການປົດປ່ອຍລິດເດດຂອງພະເຈົ້າລົງມາ

ຂ້າແດ່ພະເຈົ້າຂອງຂ້າພະອົງ ພະອົງຈະບໍ່ຊົງກະທຳການພິພາກສາເໜືອເຂົາຫລື ເພາະວ່າຂ້າພະອົງທັງຫລາຍບໍ່ມີລິດທີ່ຈະຕໍ່ສູ້ຄົນໝູ່ມະຫືມານີ້ຊຶ່ງກຳລັງມາຕໍ່ສູ້ກັບຂ້າພະອົງທັງຫລາຍ ຂ້າພະອົງທັງຫລາຍບໍ່ ຮູ້ວ່າຈະເຮັດຢ່າງໃດ ແຕ່ດວງຕາຂອງຂ້າພະອົງທັງຫລາຍເພັ່ງທີ່ພະອົງ (ຂໍ້22) ແລະເມື່ອເຂົາທັງຫລາຍຕັ້ງຕົ້ນຮ້ອງເພັງສັນລະເສີນ ພະເຈົ້າຊົງຈັດກອງຊຸ່ມຄອຍຕໍ່ສູ້ກັບຄົນອັມໂມນ ໂມອັບ ແລະຊາວ

GCI

ພູ ເຂົາເສອີ ຜູ້ໄດ້ເຂົ້າມາຕໍ່ສູ້ກັບຢູດາ ດັ່ງນັ້ນເຂົາທັງຫລາຍຈຶ່ງແຕກພ່າຍໄປ 2ພົງສາວະດານ20:12–22

5. ການເສຣີມປົດປ່ອຍພະພອນຂອງພະເຈົ້າລົງມາ

ຂ້າແດ່ພະເຈົ້າ ຂໍຊົນຊາດທັງຫລາຍສັນລະເສີນພະອົງໃຫ້ຊົນຊາດທັງຫລາຍສັນລະເສີນພະອົງ ແຜ່ນດິນ ໂລກໄດ້ເກີດຜົນ ພະເຈົ້າຄືພະເຈົ້າຂອງເຮົາຊົງອຳນວຍພະພອນແກ່ເຮົາ ພະເຈົ້າຊົງອວຍພະພອນແກ່ເຮົາ ແລ້ວ ໃຫ້ທີ່ສຸດປາຍແຜ່ນດິນໂລກເກງກົວພະອົງ ເພັງສັນລະເສີນ 67:5-7

ຄ. ສາວົກກັບພະວັດຈະນະ

1. ກຸນແຈໃນການອ່ານພະຄຳພີ

ກ) ອະທິຖານຂອງພະວິນຍານສຳແດງໃຫ້ເຫັນຄວາມຈິງ

ເມື່ອພະວິນຍານແຫ່ງຄວາມຈິງຈະສະເດັດມາແລ້ວ ພະອົງຈະນຳທ່ານທັງຫລາຍ ໄປສູ່ຄວາມຈິງທັງ ມວນ ເພາະພະອົງຈະບໍ່ຕັດໂດຍພາລະການແຕ່ພະອົງຈະຕັດສິ່ງທີ່ພະອົງຊົງໄດ້ຍິນ ແລະພະອົງຈະຊົງ ແຈ້ງໃຫ້ ທ່ານທັງຫລາຍຮູ້ເຖິງສິ່ງເຫລົ່ານັ້ນທີ່ຈະເກີດຂຶ້ນພະອົງຈະຊົງໃຫ້ເຮົາໄດ້ຮັບກຽດ ເພາະວ່າ ພະອົງຈະເອົາສິ່ງ ທີ່ເປັນຂອງເຮົາມາສຳແດງແກ່ທ່ານທັງຫລາຍ ໂຢຮັນ 16:13–14

ຂ) ພາວະນາພະວັດຈະນະ

ຢ່າໃຫ້ໜັງສືທຳບັນຍັດນີ້ຫ່າງເຫີນໄປຈາກປາກຂອງເຈົ້າ ແຕ່ເຈົ້າຈົ່ງຕຶກຕອງຕາມນັ້ນ ທັງກາງເວັນ ແລະກາງຄືນ ເພື່ອເຈົ້າຈະໄດ້ລະວັງທີ່ຈະກະທຳຕາມຂໍ້ຄວາມທີ່ຂຽນໄວ້ນັ້ນທຸກປະການ ແລ້ວເຈົ້າຈະມີ ຄວາມຈຳເລີນ ແລະເຈົ້າຈະສຳເລັດຜົນເປັນຢ່າງດີ ໂຢຊວຍ 1:8

ຄ) ທ່ອງຈຳຂໍ້ພະຄຳພີ

ຢ່າໃຫ້ມັນໜີໄປຈາກສາຍຕາຂອງເຈົ້າ ຈົ່ງຮັກສາມັນໄວ້ພາຍໃນໃຈຂອງເຈົ້າ ສຸພາສິດ 4:21

2. ປະໂຫຍດຂອງພະວັດຈະນະຂອງພະເຈົ້າ

ກ) ເຮັດໃຫ້ເຮົາມີປັນຫາ

ພະບັນຍັດຂອງພະອົງເຮັດໃຫ້ຂ້າພະອົງສະຫລາດກວ່າສັດຕູຂອງຂ້າພະອົງ ເພາະພະບັນຍັດນັ້ນຢູ່ກັບ ຂ້າພະອົງສະເໝີ ຂ້າພະອົງມີຄວາມເຂົ້າໃຈຫລາຍກວ່າບັນດາຄູຂອງຂ້າພະອົງເພາະ ບັນດາພະໂອ ວາດຂອງພະອົງເປັນຄຳພາວັນນາຂອງຂ້າພະອົງ ຂ້າພະອົງເຂົ້າໃຈຫລາຍກວ່າຄົນສູງອາຍຸ ເພາະຂ້າ ພະອົງຮັກສາຂໍ້ບັງຄັບຂອງພະອົງ ຂ້າພະອົງບໍ່ໄດ້ໜີຈາກກົດໝາຍຂອງພະອົງ ເພາະພະອົງໄດ້ຊົງ ສອນຂ້າພະອົງ ພະດຳລັດຂອງພະອົງນັ້ນຂ້າພະອົງຊົມແລ້ວຫວານແທ້ໆ ຫວານກວ່ານ້ຳຜຶ້ງເມື່ອ ເຖິງປາກຂ້າພະອົງ ຂ້າພະອົງໄດ້ຄວາມເຂົ້າໃຈໂດຍຂໍ້ບັງຄັບຂອງພະອົງ ເພາະສະນັ້ນຂ້າພະອົງກຽດ ຊັງວິຖີທຽມເທັດທຸກຢ່າງ ເພັງສັນລະເສີນ 119:98–104

ຂ) ເຮັດໃຫ້ເຮົາມີຄວາມສະຫວ່າງ

ການຄີ່ຄາຍພະວັດຈະນະຂອງພະອົງໃຫ້ຄວາມສະຫວ່າງທັງໃຫ້ຄວາມເຂົ້າໃຈແກ່ຄົນຮູ້ນ້ອຍ ເພັງສັນລະເສີນ 119:130

GCI

ຄ) ເຮັດໃຫ້ເຮົາມີສັນຕິສຸກ

ບຸກຄົນເຫລົ່ານັ້ນທີ່ຮັກພະທຳຂອງພະອົງ ມີສັນຕິພາບໃຫຍ່ຍິ່ງ ບໍ່ມີສິ່ງໃດເຮັດໃຫ້ເຂົາສະດຸດໄດ້ ເພງສັນລະເສີນ 119:165

ງ) ກໍ່ສ້າງຊີວິດເຮົາຂຶ້ນ

ບັດນີ້ຂ້າພະເຈົ້າຝາກທ່ານໄວ້ກັບພະເຈົ້າແລະກັບຄຳແຫ່ງພະຄຸນຂອງພະອົງ ຊຶ່ງມີລິດອາດກໍ່ສ້າງທ່ານຂຶ້ນໄດ້ແລະໃຫ້ທ່ານມີມໍລະດົກດ້ວຍກັນກັບບັນດາວິສຸດຊົນ ກິດຈະການ20:32

ຈ) ເຮັດໃຫ້ເຮົາມີຄວາມເຊື່ອ

ສະນັ້ນຄວາມເຊື່ອເກີດຂຶ້ນໄດ້ກໍເພາະການໄດ້ຍິນ ແລະການໄດ້ຍິນເກີດຂຶ້ນໄດ້ ກໍເພາະການປະກາດພະ ຄຣິດ ໂຣມ10:17

ສ) ເປັນປະໂຫຍດໃນການສັ່ງສອນ ແລະການຕັກເຕືອນວ່າກ່າວ

ພະຄຳພີທຸກຕອນໄດ້ຮັບການດົນໃຈຈາກພະເຈົ້າ ແລະເປັນປະໂຫຍດໃນການສອນການຕັກເຕືອນວ່າ ກ່າວ ການປັບປຸງແກ້ໄຂ ຄົນໃຫ້ດີ ແລະການອົບຮົມໃນທາງທຳ ໂກໂລຊາຍ 3:16

ງ. ສາວົກກັບການອະທິຖານ

1. ພະເຢຊູຊົງວາງແບບຢ່າງການອະທິຖານໄວ້ໃຫ້ເຮົາແລ້ວ
   ຄັ້ນເວລາເຊົ້າມືດພະອົງໄດ້ຊົງລຸກຂຶ້ນສະເດັດອອກໄປຍັງບ່ອນປ່ຽວ ແລະຊົງອະທິຖານຢູ່ບ່ອນນັ້ນ ມາຣະໂກ 1:35

2. ການອະທິຖານຄືອັນໃດ?

ການອະທິຖານຄື

ກ) ການອະທິຖານເພື່ອຜູ້ອື່ນ

ເຫດສະນັ້ນກ່ອນສິ່ງອື່ນໃດ ຂ້າພະເຈົ້າຂໍຮ້ອງທ່ານທັງຫລາຍໃຫ້ວິງວອນອະທິຖານທູນຂໍ ແລະຂອບ
ພະຄຸນເພື່ອຄົນທັງປວງ 1ຕີໂມທຽວ 2:1

ຂ) ການທູນຂໍສິ່ງທີ່ເຮົາຕ້ອງການຈາກພະເຈົ້າ

"ຈົ່ງຂໍແລ້ວຈະໄດ້ຈົ່ງຫາແລ້ວຈະພົບຈົ່ງເຄາະແລ້ວຈະເປີດໃຫ້ແກ່ທ່ານ ເພາະວ່າທຸກຄົນທີ່ຂໍກໍໄດ້ທຸກ ຄົນທີ່ສະແຫວງຫາກໍພົບ ທຸກຄົນທີ່ເຄາະກໍຈະເປີດໃຫ້ເຂົາ
ໃນພວກທ່ານມີໃຜແດ່ທີ່ຈະເອົາກ້ອນຫີນໃຫ້ລູກ ເມື່ອເຂົາຂໍຂະໜົມປັງ ຫລືໃຫ້ງູເມື່ອລູກຂໍປາ ເຫດສະ ນັ້ນຖ້າທ່ານທັງຫລາຍເອງຜູ້ເປັນຄົນບາບຍັງຮູ້ຈັກໃຫ້ຂອງດີແກ່ລູກຂອງຕົນ ຍິ່ງກວ່ານັ້ນພະບິດາ ຂອງທ່ານຜູ້ຊົງສະຖິດໃນສະຫວັນ ຈະປະທານຂອງດີແກ່ຜູ້ທີ່ຂໍຕໍ່ພະອົງ ມັດທາຍ 7:7-11

ຄ) ການຂອບພະຄຸນສຳລັບພະພອນ ແລະຄຳຕອບຂອງການອະທິຖານ

GCI

ຈົ່ງຂອບພະຄຸນໃນທຸກກໍລະນີເພາະນີ້ແຫລະເປັນນໍ້າພະໄທຂອງພະເຈົ້າ ຊຶ່ງປາກົດຢູ່ໃນພະເຢຊູຄຣິດ ເພື່ອທ່ານທັງຫລາຍ 1ເທຊະໂລນິກ 5:18

ງ) ການຟັງສຽງພະເຈົ້າ

ແກະຂອງເຮົາຍ່ອມຟັງສຽງຂອງເຮົາ ແລະເຮົາຮູ້ຈັກແກະເຫລົ່ານັ້ນ ແລະແກະນັ້ນຕາມເຮົາມາ ໂຢຮັນ10:27

3) ກຸນແຈໃນການອະທິຖານທີ່ເກີດຜົນ

ກ) ເຂົ້າສູ່ທີ່ປະທັບຂອງພະເຈົ້າດ້ວຍການຂອບພະຄຸນ
ຈົ່ງເຂົ້າປະຕູຂອງພະອົງດ້ວຍການໂມທະນາ ແລະເຂົ້າບໍລິເວນພະນິເວດຂອງພະອົງດ້ວຍການສັນລະ ເສີນຈົ່ງຖວາຍຖໂມທະນາຂອບພະຄຸນພະອົງຈົ່ງຖວາຍສາທຸການແດ່ພະນາມຂອງພະອົງ ເພງສັນລະເສີນ 100:4

ຂ) ອະທິຖານໂດຍອ້າງເຖິງພະລັກສະນະຂອງພະເຈົ້າ

ຂໍພະອົງຢ່າຄິດທີ່ຈະກະທຳເຊັ່ນນັ້ນເລີຍຢ່າຄິດທີ່ຈະຂ້າຄົນຊອບທຳພ້ອມກັບຄົນອະທຳ ເຮັດກັບຄົນ ຊອບທຳຢ່າງດຽວກັບຄົນອະທຳຂໍພະອົງຢ່າຊົງເຮັດເຊັ່ນນັ້ນເລີຍ ພະອົງຜູ້ພິພາກສາສາກົນໂລກຈະບໍ່ ເຮັດສິ່ງທີ່ຍຸດຕິທຳຫລື" ປະຖົມມະການ 18:25

ຄ) ທູນຂໍໂດຍຄວາມເຊື່ອ

ແຕ່ຖ້າບໍ່ມີຄວາມເຊື່ອແລ້ວຈະເປັນທີ່ພໍພະໄທຂອງພະເຈົ້າກໍບໍ່ໄດ້ເລີຍເພາະວ່າຜູ້ທີ່ຈະມາເຝົ້າພະເຈົ້າໄດ້ນັ້ນຕ້ອງເຊື່ອວ່າພະອົງຊົງດຳລົງພະຊົນຢູ່ ແລະພະອົງຊົງເປັນຜູ້ປະທານບຳເໜັດໃຫ້ແກ່ທຸກຄົນທີ່ສະ ແຫວງຫາພະອົງ ເຮັບເລີ 11:6

ງ) ຢູ່ກິນກັບພັນລະຍາດ້ວຍຄວາມເຂົ້າໃຈ

ທ່ານທັງຫລາຍທີ່ເປັນສາມີກໍເຊັ່ນກັນຈົ່ງຢູ່ກິນກັບພັນລະຍາດ້ວຍຄວາມເຂົ້າໃຈນາງ ຈົ່ງໃຫ້ກຽດແກ່ ພັນລະຍາເພາະເປັນເພດ ທີ່ອ່ອນແອກວ່າແລະເພາະທ່ານທັງສອງໄດ້ຮັບຊີວິດອັນເປັນ ພະຄຸນ ເປັນ ມໍ ລະດົກ ເພື່ອວ່າຄຳອະທິຖານຂອງທ່ານຈະບໍ່ມີອຸປະ ສັກຂັດຂວາງ 1ເປໂຕ 3:7

ຈ) ທູນຂໍຕາມນໍ້າພະໄທພະເຈົ້າ

ແລະນີ້ຄືຄວາມໝັ້ນໃຈທີ່ເຮົາມີຕໍ່ພະອົງຄືຖ້າເຮົາທູນຂໍສິ່ງໃດທີ່ເປັນພະປະສົງຂອງພະອົງ ພະອົງກໍຊົງ ໂປດຟັງເຮົາແລະຖ້າເຮົາຮູ້ວ່າພະອົງຊົງໂປດຟັງເຮົາ ເມື່ອເຮົາທູນຂໍສິ່ງໃດໆເຮົາກໍຮູ້ວ່າເຮົາໄດ້ຮັບສິ່ງ ທີ່ເຮົາທູນຂໍນັ້ນຈາກພະອົງ 1ໂຢຮັນ5:14–15

ສ) ເພິ່ງພາໃນຄວາມຊ່ວຍເຫລືອຂອງພະວິນຍານບໍລິສຸດ

ໃນທຳນອງດຽວກັນພະວິນຍານກໍຊົງຊ່ວຍເຮົາ ເມື່ອເຮົາອ່ອນກຳລັງເພາະເຮົາບໍ່ຮູ້ວ່າຄວນຈະອະທິ ຖານຂໍສິ່ງໃດຢ່າງໃດ ແຕ່ພະວິນຍານຊົງຊ່ວຍຂໍແທນເຮົາ ໃນເມື່ອເຮົາຄໍ່າຄວນອະທິຖານບໍ່ເປັນຄຳ ໂຣມ 8:26

ຊ) ຫລີກລ້ຽງຈາກການອະທິຖານດ້ວຍທ່າທີເຫັນແກ່ຕົວ

ທ່ານຂໍແລະບໍ່ໄດ້ຮັບ ເພາະທ່ານຂໍຜິດຫວັງໄດ້ໄປເພື່ອສະໜອງກິເລດຕັນຫາຂອງທ່ານ ຢາໂກໂບ 4:3

GCI

ຍ) ຈັດການການບໍ່ໃຫ້ອະໄພອອກໄປຈາກໃຈ

ຂະນະນັ້ນພະເຢຊູທູນວ່າ"ຂ້າແດ່ພະບິດາຜູ້ເປັນເຈົ້າແຫ່ງຟ້າສະຫວັນແລະໂລກຂ້າພະອົງສັນລະເສີນພະອົງ ທີ່ພະອົງໄດ້ຊົງປິດບັງສິ່ງເຫລົ່ານີ້ໄວ້ຈາກຜູ້ມີປັນຫາແລະຜູ້ສະຫລາດ ແຕ່ໄດ້ສຳແດງໃຫ້ຜູ້ນ້ອຍຮູ້ ມັດທາຍ 11:25

VI. ສາວົກກັບການເກີດຜົນ

ກ. ການເກີດຜົນໃນສາມດ້ານ

1. ພະເຈົ້າຊົງປະສົງໃຫ້ສາວົກຂອງພະອົງສຳແດງຜົນຂອງການກັບໃຈໃໝ່

ເຫດສັນນັ້ນຈົ່ງພິສູດການກັບໃຈຂອງເຈົ້າດ້ວຍຜົນທີ່ເກີດຂຶ້ນ ມັດທາຍ 3:8

ຖ້າໃຜກ່າວວ່າຕົນເອງບັງເກີດໃໝ່ແລ້ວເຂົາຕ້ອງສຳແດງຜົນຂອງການກັບໃຈໃໝ່ຈະຕ້ອງມີການປ່ຽນ ແປງເກີດຂຶ້ນໃນຮູບແບບການດຳເນີນຊີວິດ

ເຫດສະນັ້ນຖ້າຜູ້ໃດຢູ່ໃນພະຄຣິດ ຜູ້ນັ້ນກໍເປັນຄົນທີ່ຖືກສ້າງໃໝ່ແລ້ວ ສິ່ງສາລະພັດທີ່ເກົ່າໆກໍລ່ວງໄປນີ້ແຫລະກາຍເປັນສິ່ງໃໝ່ທັງນັ້ນ 2ໂກຣິນໂທ 5:17

2. ພະເຈົ້າຊົງປະສົງໃຫ້ເຮົາສຳແດງຜົນຂອງພະວິນຍານບໍລິສຸດ

ຄາລາເຕັຽ 5:22-23
ເຮົາບໍ່ສາມາດເຮັດໃຫ້ເກີດຜົນເຫລົ່ານີ້ຂຶ້ນມາໄດ້ໂດຍກຳລັງຂອງເຮົາເອງ ແຕ່ໂດຍລິດເດດຂອງພະວິນຍານ ບໍລິສຸດ

3. ພະເຈົ້າຊົງປະສົງໃຫ້ເຮົາສຳແດງຜົນອອກມາເປັນການກະທຳດີ
ເພື່ອທ່ານຈະໄດ້ປະພຶດຢ່າງທີ່ສົມຄວນຕໍ່ອົງພະຜູ້ເປັນເຈົ້າ ແລະເຮັດຕົນໃຫ້ເປັນທີ່ຊອບພະໄທພະອົງໃຫ້ເກີດ ຜົນໃນການດີທຸກຢ່າງ ແລະຈະເລີນຂຶ້ນໃນຄວາມຮູ້ເຖິງພະເຈົ້າ ໂກໂລຊາຍ 1:10

ທີ່ເຮົາພົ້ນນັ້ນກໍພົ້ນດ້ວຍພະຄຸນໂດຍທາງຄວາມເຊື່ອ ເອເຟໂຊ 2:8-9 ແຕ່ພະເຈົ້າກໍຊົງໜູນໃຈເຮົາທັງຫລາຍ ໃຫ້ກະທຳການດີໃນຊີວິດເຮົາ

ເບິ່ງກ່ອນພີ່ນ້ອງຂອງຂ້າພະເຈົ້າແມ່ນຜູ້ໃດຈະວ່າຕົນມີຄວາມເຊື່ອ ແຕ່ບໍ່ມີການປະຕິບັດຈະໄດ້ປະໂຫຍດອັນ ໃດຄວາມເຊື່ອຂອງເຂົາຈະຊ່ວຍໃຫ້ເຂົາພົ້ນໄດ້ຫລື ຖ້າພີ່ນ້ອງຊາຍຍິງຄົນໃດຂັດສົນເຄື່ອງນຸ່ງຫົ່ມແລະອາ ຫານປະຈຳວັນ ແລະມີຄົນໃດໃນພວກທ່ານກ່າວແກ່ເຂົາວ່າ "ເຊີນໄປເປັນສຸກເຖີດ ຂໍໃຫ້ອົບອຸ່ນແລະອີ່ມເຖີດ" ແລະບໍ່ໄດ້ໃຫ້ສິ່ງທີ່ເຂົາຂັດສົນນັ້ນຈະເປັນປະໂຫຍດອັນໃດ ຄວາມເຊື່ອກໍເຊັ່ນດຽວກັນຖ້າບໍ່ປະພຶດຕາມກໍໄຮ້ ຜົນ ຢາໂກໂບ 2:14-17

ຂ. ເງື່ອນໄຂທີ່ເຮັດໃຫ້ເກີດຜົນ

1. ຖ້າຕ້ອງການໃຫ້ຊີວິດເກີດຜົນ ເຮົາຕ້ອງຍອມໃຫ້ພະເຈົ້າລິເອົາສິ່ງທີ່ບໍ່ໄດ້ຢູ່ຝ່າຍວິນຍານອອກໄປຈາກຊີ ວິດຂອງເຮົາ

ກິ່ງທຸກກິ່ງໃນເຮົາທີ່ບໍ່ເກີດຜົນພະອົງກໍຊົງຕັດຖິ້ມເສັຽແລະກິ່ງທຸກກິ່ງທີ່ອອກຜົນ ພະອົງກໍຊົງລິເພື່ອໃຫ້ອອກ ຜົນຫລາຍຂຶ້ນ ໂຢຮັນ 15:2

GCI

2. ຖ້າຕ້ອງການໃຫ້ຊີວິດເກີດຜົນ ເຮົາຕ້ອງດຳລົງຢູ່ໃນພະເຈົ້າ

ເຮົາເປັນເຄືອອະງຸ່ນ ທ່ານທັງຫລາຍເປັນກິ່ງ ຜູ້ທີ່ເຂົ້າສະໜິດຢູ່ໃນເຮົາ ແລະເຮົາເຂົ້າສະໜິດຢູ່ໃນຜູ້ນັ້ນ ຜູ້ນັ້ນຈະເກີດຜົນຫລາຍ ເພາະຖ້າແຍກຈາກເຮົາແລ້ວ ທ່ານຈະເຮັດສິ່ງໃດບໍ່ໄດ້ເລີຍ ໂຢຮັນ 15:5

3. ຖ້າຕ້ອງການໃຫ້ຊີວິດເກີດຜົນເຮົາຕ້ອງບໍ່ດຳເນີນຊີວິດທີ່ປາມີປາມອມກັບບາບ ແລະຕ້ອງປິຕິຍິນດີໃນພະ ວັດຈະນະຂອງພະເຈົ້າ

ຄວາມສຸກເປັນຂອງບຸກຄົນຜູ້ບໍ່ດຳເນີນຕາມຄຳແນະນຳຂອງຄົນອະທຳຫລືຢືນຢູ່ໃນທາງຂອງຄົນບາບ ຫລືນັ່ງຢູ່ໃນບ່ອນນັ່ງຂອງຄົນມັກເຍາະເຍີ້ຍ ແຕ່ຄວາມປິຕິຍິນດີຂອງຜູ້ນັ້ນຢູ່ໃນພະທຳຂອງພະເຈົ້າເຂົາພາ ວັນນາພະທຳຂອງພະອົງທັງກາງເວັນແລະກາງຄືນ ເຂົາເປັນເຊັ່ນຕົ້ນໄມ້ທີ່ປູກໄວ້ແຄມ ທານນ້ຳຊຶ່ງເກີດຜົນ ຕາມລະດູການ ແລະໃບກໍບໍ່ຫ່ຽວແຫ້ງການທຸກຢ່າງ ຊຶ່ງເຂົາກະທຳກໍຈຳເລີນຂຶ້ນ ເພັງສັນລະເສີນ 1:1–3

ຄ) ສະຫລຸບ

ການເກີດຜົນ ເຮັດໃຫ້ພະເຈົ້າໄດ້ຮັບກຽດ ແລະສະແດງໃຫ້ເຫັນວ່າເຮົາຄືສາວົກຂອງພະອົງ

ພະບິດາຂອງເຮົາຊົງໄດ້ຮັບກຽດເພາະເຫດນີ້ຄື ເມື່ອທ່ານທັງຫລາຍເກີດຜົນຫລາຍ ທ່ານກໍເປັນສາວົກຂອງເຮົາ ໂຢຮັນ 15:8

VII. ສາວົກ ການທົດລອງ ແລະຄວາມທຸກຍາກ

ບໍ່ມີການທົດລອງໃດໆເກີດຂຶ້ນກັບທ່ານ ນອກເໜືອຈາກການທົດລອງຊຶ່ງເຄີຍ ເກີດກັບມະນຸດທັງຫລາຍ ພະເຈົ້າຊົງ ທ່ຽງທຳ ພະອົງຈະບໍ່ຊົງໃຫ້ທ່ານຕ້ອງຖືກທົດລອງເກີນກວ່າທີ່ທ່ານຈະທົນໄດ້ແລະເມື່ອທ່ານຖືກທົດລອງນັ້ນພະອົງຈະ ຊົງໂປດໃຫ້ທ່ານ ມີທາງທີ່ຈະຫລີກໄດ້ດ້ວຍ ເພື່ອທ່ານຈະມີກຳລັງທົນໄດ້ 1 ໂກຣິນໂທ 10:13

ໃນຄວາມພົ້ນນັ້ນທ່ານທັງຫລາຍຊື່ນຊົມຍິນດີ ເຖິງແມ່ນວ່າດຽວນີ້ຈຳເປັນທີ່ທ່ານຈະຕ້ອງທົນທຸກທໍລະມານຊົ່ວຂະນະນຶ່ງໃນການຖືກທົດລອງຕ່າງໆ ເພື່ອການລອງ ເບິ່ງຄວາມເຊື່ອຂອງທ່ານອັນປະເສີດຍິ່ງກວ່າທອງຄຳ ຊຶ່ງແມ່ນເສັຽໄປໄດ້ກໍຍັງຖືກລອງດ້ວຍໄປໄດ້ກໍຍັງຖືກລອງ ດ້ວຍໄຟ ຈະໄດ້ເປັນເຫດໃຫ້ເກີດຄວາມສັນລະເສີນເກີດສັກສີແລະກຽດ ໃນເວລາທີ່ພະເຢຊູຄຣິດຈະສະເດັດມາປາກົດ 1ເປໂຕ 1:6–7

ສິ່ງນຶ່ງທີ່ສາວົກຕ້ອງຮຽນຮູ້ຄືການເອົາຊະນະການທົດລອງແລະຍຶດໝັ້ນໃນເວລາແຫ່ງຄວາມທຸກ ແລະການທົດລອງໃຈ ຕາບໃດທີ່ເຮົາຍັງຄົງຢູ່ສະຫວັນຟາກນີ້ ເຮົາກໍຈະຕ້ອງປະເຊີນກັບການທົດລອງ ແລະຄວາມຍາກລຳບາກຢູ່ສະເໝີ ຢາໂກໂບ 1:2–15

ກ. ສາວົກກັບການທົດລອງ

1. ພະເຈົ້າບໍ່ເຄີຍທົດລອງຜູ້ໃດ

ເມື່ອຜູ້ໃດຖືກລໍ້ໃຫ້ຫລົງຢ່າໃຫ້ຜູ້ນັ້ນເວົ້າວ່າ “ພະເຈົ້າຊົງລໍ້ລອງຂ້າພະເຈົ້າໃຫ້ຫລົງ” ເພາະວ່າຄວາມຊົ່ວຈະມາລໍ້ລອງພະເຈົ້າໃຫ້ຫລົງບໍ່ໄດ້ ແລະພະອົງເອງກໍບໍ່ຊົງລໍ້ລອງຜູ້ໃດໃຫ້ຫລົງເລີຍ ຢາໂກໂບ 1:13

2. ການທົດລອງມາຈາກຊາຕານ ຊຶ່ງສອຍໂອກາດເອົາຄວາມປາດຖະໜາຊົ່ວໃນຕົວຄົນເຮົາເປັນເຄື່ອງມືຂອງ ມັນ

ແຕ່ວ່າທຸກຄົນກໍຖືກລໍ້ລອງໃຫ້ຫລົງ ເມື່ອກິເລດຂອງຕົວເອງລໍ້ລອງ ແລະຊັກນຳໃຫ້ກະທຳຕາມ ຢາໂກໂບ1:14

GCI

3. ການທົດລອງ ເກີດຂຶ້ນໃນ 3ລັກສະນະ 1ໂຢຮັນ2:15–17
   ກ) ຕັນຫາຂອງຕາ
   ຂ) ຕັນຫາຂອງເນື້ອໜັງ
   ຄ) ຄວາມຍິ່ງທະນົງໃນລາບຍົດ

4. ວິທີຕ່າງໆ ທີ່ຊາຕານໃຊ້ໃນການທົດລອງ

ກ) ສະໜັບສະໜູນໃຫ້ຄົນບໍ່ເຊື່ອຟັງ
ໃນບັນດາສັດປ່າທີ່ພະເຈົ້າຊົງສ້າງນັ້ນ ງູສະຫລາດກວ່າໝູ່ໝົດ ມັນຖາມຍິງນັ້ນວ່າ "ຈິງຫລືທີ່ພະເຈົ້າ ຕັດຫ້າມວ່າ ຢ່າກິນຜົນຈາກຕົ້ນໄມ້ໃດໆ ໃນສວນນີ້"

ຍິງນັ້ນຈຶ່ງຕອບງູວ່າ "ໝາກໄມ້ຂອງຕົ້ນໄມ້ຕ່າງໆໃນສວນນີ້ເຮົາກິນໄດ້ ເວັ້ນແຕ່ໝາກໄມ້ຂອງຕົ້ນໄມ້ ທີ່ຢູ່ກາງ ສວນນັ້ນພະເຈົ້າຕັດຫ້າມວ່າ ຢ່າກິນຫລືຖືກຕ້ອງເລີຍ ບໍ່ສະນັ້ນຈະຕາຍ"

ງູຈຶ່ງເວົ້າກັບຍິງນັ້ນວ່າ"ເຈົ້າຈະບໍ່ຕາຍແທ້ດອກເພາະພະເຈົ້າຊົງຮູ້ຢູ່ວ່າ ເຈົ້າກິນໝາກໄມ້ນັ້ນວັນໃດຕາ ຂອງເຈົ້າຈະສະຫວ່າງຂຶ້ນໃນວັນນັ້ນແລ້ວເຈົ້າຈະເປັນເໝືອນພະເຈົ້າ ຄືສຳນຶກໃນຄວາມດີ ແລະ ຄວາມຊົ່ວ"

ເມື່ອຍິງນັ້ນເຫັນວ່າຕົ້ນໄມ້ນັ້ນໜ້າກິນ ແລະໜ້າເບິ່ງທັງເປັນຕົ້ນໄມ້ທີ່ມຸ້ງໝາຍຈະໃຫ້ເກີດປັນຍາຈຶ່ງເກັບໝາກໄມ້ນັ້ນມາກິນແລ້ວສົ່ງໃຫ້ສາມີກິນນຳ ເຂົາກໍກິນຕາຂອງເຂົາທັງສອງຄົນກໍສະຫວ່າງຂຶ້ນ ຈຶ່ງສຳນຶກວ່າຕົນເປືອຍກາຍຢູ່ກໍເອົາໃບໄມ້ມາຫຍິບເປັນເຄື່ອງປົກປິດຮ່າງກາຍໄວ້ ປະຖົມມະການ3:1–7

ຂ) ເຂົ້າໄປກ່ຽວຂ້ອງກັບການປະພຶດຜິດທາງເພດ

ປະຖົມມະການ 39:7–10

ຄ) ເປັນເຫດໃຫ້ຄົນຮັກສິ່ງຂອງ ຫລືຄົນອື່ນຫລາຍກວ່າຮັກພະເຈົ້າ

ເພາະວ່າພວກຕ່າງຊາດສະແຫວງຫາສິ່ງຂອງທັງປວງນີ້ ແຕ່ວ່າພະບິດາຂອງທ່ານຜູ້ຊົງສະຖິດໃນ ສະຫວັນຊົງຮູ້ແລ້ວວ່າທ່ານ ຕ້ອງການສິ່ງທັງປວງເຫລົ່ານີ້ແຕ່ທ່ານທັງຫລາຍ ຈົ່ງສະແຫວງຫາ ແຜ່ນ ດິນຂອງພະເຈົ້າແລະຄວາມຊອບທຳຂອງພະອົງກ່ອນ ແລ້ວພະອົງຈະຊົງເພີ້ມເຕີມສິ່ງທັງປວງເຫລົ່າ ນີ້ໃຫ້ ມັດທາຍ6:32–33

ງ) ເປັນເຫດໃຫ້ຄົນຮັກເງິນທອງ

ສ່ວນຄົນເຫລົ່ານັ້ນທີ່ຢາກລ່ຳລວຍກໍຕົກຢູ່ໃນຄ່າຍຂອງຄວາມເຍົ້າຍວນ ແລະຕິດບ້ວງແຮ້ວ ແລະໃນ ຄວາມປາດຖະໜານາທີ່ໄຮ້ຄວາມຄິດແລະເປັນໄພແກ່ຕົວ ຊຶ່ງເຮັດໃຫ້ຄົນເຮົາຕ້ອງ ເຖິງຄວາມພິນາດ ເສື່ອມສູນໄປ ດ້ວຍວ່າການຮັກເງິນທອງນັ້ນເປັນມູນຮາກແຫ່ງຄວາມຊົ່ວທັງມວນ ແລະເພາະຄວາມ ໂລບນີ້ແຫລະຈຶ່ງເຮັດໃຫ້ບາງຄົນຫ່າງໄກຈາກຄວາມເຊື່ອແລະຄອບຄຸມດ້ວຍຄວາມທຸກ 1ຕີໂມທຽວ6:9–10

ຈ) ເປັນເຫດໃຫ້ຄົນຈົ່ມ ແລະນິນທາວ່າຮ້າຍ

ຢ່າໃຫ້ເຮົາຈົ່ມເໝືອນຢ່າງທີ່ບາງຄົນໃນພວກເຂົາໄດ້ຈົ່ມ ແລ້ວກໍຕ້ອງພິນາດດ້ວຍອົງເພັດຊະຄາດ 1ໂກຣິນໂທ 10:10

GCI

5. ຜົນຂອງການທົດລອງ

ກ) ຖ້າສາວົກຍອມແພ້ການທົດລອງເຂົາກຳລັງເຮັດບາບຕໍ່ພະເຈົ້າ
ການປະເຊີນການທົດລອງບໍ່ແມ່ນຄວາມບາບ ແຕ່ການຍອມແພ້ການທົດລອງເປັນບາບຊຶ່ງໃນທີ່ສຸດ ຈະນຳຊີວິດໄປສູ່ຄວາມຫລົ້ມຈົມ

ຄັ້ນຕັນຫາເກີດຂຶ້ນແລ້ວກໍເຮັດໃຫ້ເກີດບາບ ແລະເມື່ອບາບຈະເລີນເຕີບໃຫຍ່ເຕັມທີ່ແລ້ວກໍນຳໄປສູ່ ຄວາມຕາຍ ຢາໂກໂບ 1:15

ຂ) ຖ້າສາວົກຕໍ່ສູ້ການທົດລອງ

(1) ພະເຈົ້າຊົງໄດ້ຮັບກຽດ
(2) ເຂົາຈະເຂັ້ມແຂງຂຶ້ນໃນຄວາມເຊື່ອ ແລະຄວາມເປັນຜູ້ໃຫຍ່
(3) ເຂົາກາຍເປັນຜູ້ມີໄຊຊະນະ

6. ວິທີຮັບມືກັບການທົດລອງ

ກ) ໂດຍພະວັດຈະນະຂອງພະເຈົ້າ

ຄັ້ງນັ້ນພະວິນຍານຊົງນຳພະເຢຊູເຂົ້າໄປໃນຖິ່ນທຸລະກັນດານ ເພື່ອມາຈະໄດ້ມາປະຈົນ ແລະພະອົງຊົງ ອົດພະກາຍະຫານສີ່ສິບວັນສີ່ສິບຄືນ ພາຍຫລັງພະອົງກໍຊົງຢາກພະກາຍະຫານ ສ່ວນຜູ້ປະຈົນ ມາຫາ ພະອົງທູນວ່າ “ຖ້າທ່ານເປັນພະບຸດຂອງພະເຈົ້າ ຈົ່ງສັ່ງກ້ອນຫີນເຫລົ່ານີ້ໃຫ້ກາຍເປັນພະກາຍຍະ ຫານ”ຝ່າຍພະອົງຕັດຕອບວ່າ “ມີພະຄຳພີຂຽນໄວ້ວ່າ” ມະນຸດຈະບໍ່ລ້ຽງຊີວິດດ້ວຍອາຫານພຽງ ຢ່າງດຽວແຕ່ຈະລ້ຽງດ້ວຍພະວັດຈະນະທີ່ອອກມາຈາກພະໂອດຂອງພະເຈົ້າ ມັດທາຍ 4:1-4

ຂ) ໂດຍການເຝົ້າລະວັງ ແລະອະທິຖານຢູ່ສະເໝີ

ທ່ານທັງຫລາຍຈົ່ງເຝົ້າລະວັງ ແລະອະທິຖານເພື່ອທ່ານຈະບໍ່ຕ້ອງຖືກການທົດລອງຈິດໃຈພ້ອມແລ້ວ ກໍຈິງແຕ່ກາຍຍັງອ່ອນກຳລັງ” ມາຣະໂກ 14:38

ຄ) ໂດຍບໍ່ເປີດໂອກາດໃຫ້ແກ່ມານ

ແລະຢ່າໃຫ້ໂອກາດແກ່ມານ ເອເຟໂຊ 4:27

ງ) ໂດຍນ້ອມໃຈຍອມຟັງພະເຈົ້າ ແລະຕໍ່ສູ້ກັບມານ

ເຫດສະນັ້ນທ່ານທັງຫລາຍຈົ່ງນ້ອມໃຈຍອມຟັງພະເຈົ້າ ຈົ່ງຕໍ່ສູ້ກັບມານ ແລະມັນຈະໜີໄປຈາກທ່ານ ຢາໂກໂບ 4:7

ຈ) ໂດຍການເບິ່ງທີ່ອົງພະເຢຊູ

ເພາະເຫດທີ່ພະອົງໄດ້ຊົງທົນທຸກທໍລະມານ ແລະຖືກລອງໃຈພະອົງຈຶ່ງຊົງສາມາດ ຊ່ວຍຜູ້ທີ່ຖືກລອງ ໃຈໄດ້ ເຮັບເລີ 2:18

ຂ. ສາວົກກັບຄວາມທຸກຍາກ

1. ຈຸດປະສົງຂອງຄວາມທຸກຍາກ

GCI

ກ) ເພື່ອພັດທະນາບຸກຄະລິກກະພາບຂອງເຮົາ

ເບິ່ງກ່ອນພີ່ນ້ອງຂອງຂ້າພະເຈົ້າເມື່ອທ່ານທັງຫລາຍປະສົບຄວາມທຸກຍາກລໍາບາກຕ່າງໆກໍ່ຈົ່ງຖືວ່າ ເປັນເລື່ອງໜ້າຍິນດີ ເພາະທ່ານທັງຫລາຍຮູ້ວ່າ ການທົດລອງຄວາມເຊື່ອຂອງທ່ານນັ້ນ ເຮັດໃຫ້ເກີດ ຄວາມໜັກແໜ້ນໝັ້ນຄົງ ຢາໂກໂບ 1:2-3

ຂ) ເພື່ອເຮັດໃຫ້ເຮົາຖ່ອມຕົວລົງ ແລະເພື່ອສອນວິຖີທາງຂອງພະເຈົ້າແກ່ເຮົາ

ທ່ານທັງຫລາຍຈົ່ງລະລຶກເຖິງທາງຊຶ່ງພະເຢໂຮວາພະເຈົ້າຂອງທ່ານຊົງນໍາທ່ານຢູ່ໃນຖິ່ນທຸລະກັນດານເຖິງສີ່ສິບປີເພື່ອພະອົງຈະຊົງກະທໍາໃຫ້ທ່ານຖ່ອມໃຈ ແລະທົດລອງໃຫ້ຮູ້ວ່າຈິດໃຈຂອງທ່ານເປັນ ຢ່າງໃດ ເບິ່ງວ່າທ່ານຈະຮັກສາພະບັນຍັດຂອງພະອົງຫລືບໍ່ ສະເຫລີຍທໍາບັນຍັດ 8:2

ຄ) ເພື່ອຊໍາລະເຮົາ

ຂ້າແດ່ພະເຈົ້າເພາະພະອົງຊົງລອງໃຈຂ້າພະອົງທັງຫລາຍ ພະອົງຊົງທົດລອງຂ້າພະອົງ ຢ່າງທົດລອງ ເງິນ ເພງສັນລະເສີນ66:10

ງ) ເພື່ອເຮັດໃຫ້ຄວາມເຊື່ອຂອງເຮົາເຂັ້ມແຂງຂຶ້ນ

ໃນຄວາມພົ້ນນັ້ນທ່ານທັງຫລາຍຊື່ນຊົມຍິນດີ ເຖິງແມ່ນວ່າດຽວນີ້ຈໍາເປັນທີ່ທ່ານຈະຕ້ອງທົນທຸກທໍລະ ມານຊົ່ວຂະນະນຶ່ງໃນການຖືກທົດລອງຕ່າງໆ ເພື່ອການລອງເບິ່ງຄວາມເຊື່ອຂອງທ່ານອັນປະເສີດ ຍິ່ງກວ່າທອງຄໍາຊຶ່ງແມ່ນເສັຽໄປໄດ້ກໍຍັງຖືກລອງດ້ວຍໄຟ ຈະໄດ້ເປັນເຫດໃຫ້ເກີດຄວາມສັນລະເສີນ ກຽດສັກສີ ແລະກຽດ ໃນເວລາທີ່ພະເຢຊູຄຣິດຈະສະເດັດມາປາກົດ 1ເປໂຕ1:6-7

ຈ) ເພື່ອເຮັດໃຫ້ເຮົາສາມາດເຮັດພັນທະກິດໄດ້ເກີດຜົນຫລາຍຂຶ້ນ

ພະອົງຜູ້ຊົງຊູໃຈເຮົາໃນການທຸກຍາກທັງສິ້ນຂອງເຮົາ ເພື່ອເຮົາຈະສາມາດຊູໃຈຄົນເຫລົ່ານັ້ນທີ່ມີຄວາມທຸກຍາກຢ່າງໃດຢ່າງນຶ່ງໄດ້ດ້ວຍຄວາມຊູໃຈຊຶ່ງຕົວເຮົາເອງໄດ້ຮັບຈາກພະເຈົ້າ ເພາະວ່າເຮົາ ມີສ່ວນທົນທຸກກັບພະຄຣິດຫລາຍເທົ່າໃດ ຄວາມຊູໃຈ ຂອງເຮົາເນື່ອງຈາກພະຄຣິດກໍ່ຫລາຍສັນນັ້ນ
2 ໂກຣິນໂທ 1:4-5

2. ວິທີຕອບສະໜອງໃນເວລາທີ່ປະເຊີນກັບຄວາມທຸກຍາກ

ກ. ຊື່ນຊົມຍິນດີ

ແຕ່ວ່າທ່ານທັງຫລາຍຈົ່ງຊື່ນຊົມຍິນດີໃນການທີ່ທ່ານໄດ້ມີສ່ວນຮ່ວມໃນຄວາມທຸກຍາກຂອງພະຄຣິດ ເພື່ອວ່າເມື່ອພະສິຣິຂອງພະເຈົ້າປາກົດຂຶ້ນ ທ່ານທັງຫລາຍກໍຈະໄດ້ຊື່ນຊົມຍິນດີຢ່າງຫລວງຫລາຍ 1ເປໂຕ4:13

ຂ. ມອບຊີວິດໄວ້ກັບພະເຈົ້າ

ເຫດສະນັ້ນ ຂໍໃຫ້ຄົນທັງຫລາຍທີ່ທົນທຸກທໍລະມານຕາມພະປະສົງຂອງພະເຈົ້າ ຈົ່ງປະພຶດຊອບ ແລະ ຝາກວິນຍານຈິດຂອງຕົນໄວ້ກັບອົງພະຜູ້ສ້າງ ຜູ້ທ່ຽງທໍານັ້ນເຖີດ 1ເປໂຕ 4:19

GCI

VIII. ສາວົກກັບນ້ຳພະໄທຂອງພະເຈົ້າ

ພີ່ນ້ອງທັງຫລາຍດ້ວຍເຫດນີ້ໂດຍເຫັນແກ່ຄວາມເມດຕາກະລຸນາຂອງພະເຈົ້າ ຂ້າພະເຈົ້າຈຶ່ງວິງວອນທ່ານທັງຫລາຍ ໃຫ້ຖວາຍຕົວຂອງທ່ານແດ່ພະອົງ ເພື່ອເປັນເຄື່ອງບູຊາທີ່ມີຊີວິດອັນບໍລິສຸດ ແລະເປັນທີ່ພໍພະໄທພະເຈົ້າ ຊຶ່ງເປັນການ ນະມັດສະການໂດຍວິນຍານຈິດຂອງທ່ານທັງຫລາຍ ຢ່າປະພຶດຕາມຢ່າງຄົນໃນຍຸກນີ້ ແຕ່ຈົ່ງຮັບການປ່ຽນແປງຈິດໃຈ ແລ້ວອຸປະນິໄສຂອງທ່ານຈຶ່ງຈະປ່ຽນໃຫມ່ ເພື່ອທ່ານຈະໄດ້ຮູ້ນ້ຳພະໄທຂອງພະເຈົ້າຈະໄດ້ຮູ້ວ່າອັນໃດດີອັນໃດເປັນທີ່ ຊອບພະໄທ ແລະອັນໃດດີຍອດຢ້ຽມ ໂຣມ12:1-2

ເພາະວ່າເຮົາເປັນຝີພະຫັດຂອງພະອົງທີ່ຊົງສ້າງຂື້ນໃນພະເຢຊູຄຣິດເພື່ອໃຫ້ປະກອບການດີ ຊຶ່ງພະເຈົ້າໄດ້ຊົງດຳຣິໄວ້ ລ່ວງໜ້າເພື່ອໃຫ້ເຮົາກະທຳ ເອເຟໂຊ 2:10

ພະເຈົ້າຊົງມີແຜນການສຳລັບສາວົກທຸກຄົນ

"ເຮົາໄດ້ຮູ້ຈັກເຈົ້າ ກ່ອນທີ່ເຮົາໄດ້ກໍ່ຮ່າງຕົວເຈົ້າທີ່ໃນຄັນ ແລະກ່ອນທີ່ເຈົ້າຄອດຈາກຄັນເຮົາກໍໄດ້ກຳໜົດຕົວເຈົ້າໄວ້ ເຮົາໄດ້ແຕ່ງຕັ້ງເຈົ້າເປັນຜູ້ເຜີຍພະວັດຈະນະໃຫ້ແກ່ບັນດາປະຊາຊາດ" ເຍເຣມີ 1:5

ຜູ້ໃດທີ່ເປັນຄົນຢຳເກງພະເຈົ້າ ພະອົງຈະຊົງສັ່ງສອນຜູ້ນັ້ນໃນທາງທີ່ເຂົາຄວນເລືອກໄດ້ ເພັງສັນລະເສີນ 25:12

ກ. ເງື່ອນໄຂທີ່ເຮັດໃຫ້ເຮົາຮູ້ຈັກນ້ຳພະໄທຂອງພະເຈົ້າ

1. ສາວົກຕ້ອງປາດຖະໜາທີ່ຈະມີຊີວິດທີ່ບໍລິສຸດ

   ພີ່ນ້ອງທັງຫລາຍດ້ວຍເຫດນີ້ໂດຍເຫັນແກ່ຄວາມເມດຕາກະລຸນາຂອງພະເຈົ້າ ຂ້າພະເຈົ້າຈຶ່ງວິງວອນທ່ານ ທັງຫລາຍໃຫ້ຖວາຍຕົວຂອງທ່ານແດ່ພະອົງເພື່ອເປັນເຄື່ອງບູຊາທີ່ມີຊີວິດອັນບໍລິສຸດ ແລະເປັນທີ່ພໍ ພະໄທພະ ເຈົ້າຊຶ່ງເປັນການນະມັດສະການໂດຍວິນຍານຈິດຂອງທ່ານທັງຫລາຍ ຢ່າປະພຶດຕາມຢ່າງຄົນໃນຍຸກນີ້ ແຕ່ ຈົ່ງຮັບການປ່ຽນແປງຈິດໃຈແລ້ວອຸປະນິໄສຂອງທ່ານຈຶ່ງຈະປ່ຽນໃຫມ່ ເພື່ອທ່ານຈະໄດ້ຮູ້ນ້ຳພະໄທຂອງ ພະເຈົ້າ ຈະໄດ້ຮູ້ວ່າອັນໃດດີອັນໃດເປັນທີ່ຊອບພະໄທ ແລະອັນໃດດີຍອດຢ້ຽມ ໂຣມ12:1-2

2. ສາວົກຕ້ອງມີຄວາມຖ່ອມໃຈ

   ພະອົງຊົງນຳຄົນໃຈຖ່ອມໄປໃນສິ່ງທີ່ຖືກແລະຊົງສອນທາງຂອງພະອົງແກ່ຄົນໃຈຖ່ອມ ເພັງສັນລະເສີນ25:9

3. ສາວົກຕ້ອງເຕັມໃຈທີ່ຈະໄວ້ວາງໃຈໃນພະເຈົ້າ

   ຈົ່ງວາງໃຈໃນພະເຈົ້າດ້ວຍສຸດໃຈຂອງເຈົ້າແລະຢ່າເພິ່ງພາຄວາມຮອບຮູ້ຂອງຕົນເອງ ຈົ່ງຍອມຮັບຮູ້ພະອົງ ໃນທຸກທາງຂອງເຈົ້າ ແລະພະອົງຈະຊົງກະທຳໃຫ້ວິຖີຂອງເຈົ້າລາບລື້ນ ຢ່າຄິດວ່າຕົນສະຫລາດ ຈົ່ງຢຳເກງ ພະເຈົ້າ ແລະຫັນຈາກຄວາມ ຊົ່ວຮ້າຍ ສຸພາສິດ 3:5-7

ຂ. ວິທີທີ່ພະເຈົ້າສຳແດງໃຫ້ເຮົາຮູ້ຈັກນ້ຳພະໄທຂອງພະອົງ

1. ພະວັດຈະນະຂອງພະເຈົ້າ

   ໜຸ່ມໆຈະຮັກສາທາງຂອງຕົນໃຫ້ບໍລິສຸດໄດ້ຢ່າງໂດຍລະແວດລະວັງຕາມພະວັດຈະນະຂອງພະອົງ ຂ້າພະ ອົງສະແຫວງພະອົງດ້ວຍສຸດໃຈຂອງຂ້າພະອົງຂໍຢ່າໃຫ້ຂ້າພະອົງຫລົງໄປຈາກພະບັນຍັດຂອງພະອົງຂ້າພະອົງໄດ້ສະສົມພະດຳລັດຂອງພະອົງໄວ້ໃນໃຈຂອງຂ້າພະອົງ ເພື່ອຂ້າພະອົງຈະບໍ່ເຮັດບາບຕໍ່ພະອົງ

GCI

ພະວັດຈະນະຂອງພະອົງເປັນໂຄມສຳລັບຕີນຂອງຂ້າພະອົງ ແລະເປັນຄວາມສະຫວ່າງແກ່ທາງຂອງຂ້າພະ ອົງ ເພງສັນລະເສີນ 119:9-11,105

ຖ້າເຮົາຕ້ອງການຮູ້ຈັກນ້ຳພະໄທຂອງພະເຈົ້າ ເຮົາຕ້ອງໃຊ້ເວລາກັບພະວັດຈະນະຂອງພະອົງ

2. ສຽງໜັກແໜ້ນແຜ່ວເບົາຂອງພະວິນຍານບໍລິສຸດ

ພາຍຫລັງແຜ່ນດິນໄຫວກໍເກີດໄຟ ແຕ່ພະເຈົ້າຫາຊົງສະຖິດໃນໄຟນັ້ນບໍ່ ພາຍຫລັງໄຟກໍມີສຽງເບົາໆ 1ພົງກະສັດ 19:12

3. ຄຳປຶກສາຈາກຜູ້ນຳທີ່ເປັນຜູ້ໃຫຍ່

ທາງຂອງຄົນໂງ່ນັ້ນຖືກຕ້ອງໃນສາຍຕາຂອງເຂົາເອງ ແຕ່ນັກປາດຍ່ອມຟັງຄຳແນະນຳ ສຸພາສິດ 12:15

4. ສຽງທີ່ໄດ້ຍິນທາງຫູ

ເຊົາໂລຈຶ່ງລົ້ມລົງເຖິງດິນ ແລະໄດ້ຍິນພະສຸລະສຽງຕັດວ່າ "ເຊົາໂລ ເຊົາໂລເອີຍ ເຈົ້າຂົ່ມເຫັງເຮົາເຮັດຫຍັງ"
ເຊົາໂລຈຶ່ງທູນຖາມວ່າ "ພະອົງເຈົ້າຂ້າ ພະອົງຊົງເປັນຜູ້ໃດ" ພະອົງຕັດວ່າ "ເຮົາຄືເຢຊູ ຊຶ່ງເຈົ້າຂົ່ມເຫັງ" ກິດຈະການ 9:4-5

5. ຄວາມຝັນ

ແຕ່ເມື່ອໂຢເຊບຍັງຄິດໃນເລື່ອງນີ້ຢູ່ ກໍມີທູດອົງນຶ່ງຂອງພະເປັນເຈົ້າມາປາກົດແກ່ໂຢເຊບໃນຄວາມຝັນວ່າ "ໂຢເຊບບຸດດາວິດ ຢ່າສູ່ຢ້ານທີ່ຈະຮັບມາຣີອາມາເປັນພັນລະຍາຂອງເຈົ້າເລີຍ ເພາະວ່າຜູ້ຊຶ່ງປະທິສົນ ທີໃນ ຄັນຂອງນາງເປັນໂດຍເດດຂອງພະວິນຍານບໍລິສຸດ ນາງຈະປະສູດບຸດຊາຍແລ້ວເຈົ້າຈຶ່ງເອີ້ນບຸດນັ້ນ ວ່າເຢຊູ ເພາະວ່າທ່ານເປັນຜູ້ທີ່ຈະຊ່ວຍຊົນຊາດຂອງທ່ານໃຫ້ພົ້ນຈາກຄວາມຜິດບາບຂອງເຂົາ
ມັດທາຍ 1:20-21

6. ນິມິດ

ກໍຫິວຢາກຈະຮັບປະທານອາຫານ ແຕ່ໃນລະຫວ່າງທີ່ເຂົາຍັງຈັດອາຫານຢູ່ ເປໂຕກໍເຂົ້າສູ່ພະວັງ
ກິດຈະການ 10:10

7. ຄຳພະຍານ

ເມື່ອຄົນເຫລົ່ານັ້ນກຳລັງນະມັດສະການອົງພະຜູ້ເປັນເຈົ້າ ແລະຖືອົດອາຫານ ພະວິນຍານບໍລິສຸດໄດ້ຕັດສັ່ງ ວ່າ"ຈົ່ງຕັ້ງບາລານາບັດກັບເຊົາໂລໄວ້ສຳລັບການຊຶ່ງເຮົາເອີ້ນໃຫ້ເຂົາເຮັດນັ້ນ" ກິດຈະການ 13:2

8. ສິ່ງແວດລ້ອມ

ເຮົາຕ້ອງລະມັດລະວັງໃນເລື່ອງກ່ຽວກັບສິ່ງແວດລ້ອມ

GCI

ແຕ່ໂຢນາໄດ້ລຸກຂຶ້ນໜີໄປຍັງເມືອງທາຊິດຈາກພະພັກພະເຈົ້າ ທ່ານໄດ້ລົງໄປຍັງເມືອງຢັບຟາ ແລະພົບກໍາ ປັ່ນລໍານຶ່ງກໍາລັງໄປເມືອງທານຊິດ ດັ່ງນັ້ນທ່ານຈຶ່ງຊໍາລະຄ່າໂດຍສານ ແລະຂຶ້ນເຮືອເດີນທາງຮ່ວມກັບ ເຂົາທັງຫລາຍໄປຍັງເມືອງທາຊິ ໃຫ້ພົ້ນຈາກພະພັກພະເຈົ້າ ໂຢນາ 1:3

ໂປໂລກັບສິລາ ຢູ່ໃນສະພາບທີ່ຊຸ່ຽງຫລາຍ ແຕ່ທ່ານທັງສອງຍັງຢູ່ໃນນໍ້າພະໄທຂອງພະເຈົ້າ ກິດຈະການ 16:24

ຄ. ສະຫລຸບ

ວິທີຫລັກໃນການຢືນຢັນເຖິງການຊົງນໍາ ຊຶ່ງອາດຈະເປັນນິມິດການພະຍາກອນ ຄວາມຝັນ

1. ສັນຕິສຸກຈາກພະເຈົ້າ

   ຟີລິບປອຍ 4:6-7

2. ການຢືນຢັນຈາກຜູ້ນໍາທີ່ເປັນຜູ້ໃຫຍ່ໃນພະເຈົ້າ

   ເຮັບເລີ 13:17

3. ພະວັດຈະນະຂອງພະເຈົ້າ
   2ຕີໂມທຽວ 3:16

IX. ຫລັກການໃນການປະຕິບັດໃນການສ້າງສາວົກ

ກ. ການເລືອກສາວົກທີ່ມີສັກກະຍະພາບ

1. ພະເຢຊູຊົງສົນພະໄທທີ່ຄຸນນະພາບ ບໍ່ແມ່ນປະລິມານ ເວລອນ ມິວ ກ່າວໄວ້ໃນໜັງສືການຕິດຕາມຜົນໃນພັນທະສັນຍາໃຫມ່ວ່າ
   "ການຕັດສິນໃຈທີ່ຈະເຮັດພັນທະກິດແບບຂັບຂັນແທນທີ່ຈະເຮັດແບບກວ້າງໆ ຈະປ່ຽນແປງຊີວິດຂອງເຮົາ ໃນທຸກດ້ານ ຄຸນນະພາບເຮັດໃຫ້ເກີດປະລິມານການທີ່ຈະສ້າງຄົນນຶ່ງຄົນໃຫ້ເປັນສາວົກເພື່ອນໍາມອນຊົນມາ ຫາພະເຈົ້ານັ້ນຕ້ອງອາໃສນິມິດ ຖ້າທ່ານຝຶກອົບຮົບຄົນນຶ່ງຄົນເທົ່າກັບທ່ານກໍາລັງເຈາະເຂົ້າສູ່ຜູ້ຄົນຈໍານວນ ຫລາຍ"

2. ເປັນສິ່ງສໍາຄັນທີ່ເຮົາຕ້ອງເຂົ້າໃຈເຖິງຂໍ້ຈໍາກັດຂອງຕົວເອງ ຢ່າປະເມີນສິ່ງທີ່ພະເຈົ້າສາມາດເຮັດຜ່ານທາງຕົວທ່ານໄວ້ຕໍ່າເກີນໄປ ແຕ່ກໍຈົ່ງຫລີກລ້ຽງການ ທຸ່ມເທຫລາຍ ເກີນໄປຈົນເຮັດໃຫ້ເກີດຄວາມສູນເສັຽຕໍ່ສຸຂະພາບ ແລະຄອບຄົວຂອງທ່ານ
3. ສາວົກຂອງທ່ານ ຕ້ອງເປັນຄົນທີ່ພະເຈົ້າປະທານມາໃຫ້ ພະເຢຊູປະກາດວ່າ "ທ່ານທັງຫລາຍບໍ່ໄດ້ເລືອກເຮົາ ແຕ່ເຮົາໄດ້ເລືອກທ່ານໄວ້.." ໂຢຮັນ15:16 ພະອົງທູນຕໍ່ພະບິດາວ່າ "ຂ້າພະອົງໄດ້ສໍາແດງພະອົງແກ່ບັນດາ ຜູ້ທີ່ພະອົງປະທານແກ່ຂ້າພະອົງຈາກໂລກນີ້ ພວກເຂົາເປັນຂອງພະອົງ ພະອົງຊົງປະທານພວກເຂົາໃຫ້ແກ່ ຂ້າພະອົງ.. (ໂຢຮັນ17:6) ພະອົງຕັດເຖິງແນວຄິດຢ່າງດຽວກັນດ້ວຍໃນຂໍ້ທີ່9ໂດຍຄວາມເຊື່ອທ່ານ ຮູ້ວ່າພະເຈົ້າໄດ້ຊົງຕຽມຄົນໄວ້ພ້ອມແລ້ວເພື່ອໃຫ້ທ່ານໄດ້ນໍາເຂົາຮັບເຊື່ອແລະອົບຮົມສັ່ງສອນເຂົາ ພະອົງ ຈະສໍາແດງໃຫ້ທ່ານຮູ້ຈັກຄົນເຫລົ່ານີ້ ຫາກທ່ານສະແຫວງຫາສິ່ງທີ່ພະອົງຊົງເລືອກສັນໄວ້ນັ້ນ

4. ຢ່າເຮັດຜິດພາດໂດຍການເລືອກຄົນຢ່າງຮີບເລັ່ງ
   ພະເຢຊູບໍ່ໄດ້ເລືອກທຸກຄົນທີ່ມາຫາພະອົງໄວ້ເປັນສາວົກ ພະອົງຈະຊົງເລືອກສັນສາວົກຢ່າງລະມັດລະວັງ

GCI

5. ບົດບາດຂອງການອະທິຖານໃນການເລືອກສັນສາວົກ ເມື່ອພະເຢຊູເລືອກກຸ່ມຄົນນຶ່ງໄວ້ເພື່ອທີ່ຈະໃຊ້ເວລາທຸ້ມເທ ແລະໃຫ້ຄວາມສົນໃຈແກ່ພວກເຂົາ ເປັນພິເສດ ນັ້ນພະຄຳພີກ່າວວ່າ "ວັນນຶ່ງພະເຢຊູໄດ້ສະເດັດໄປຍັງບໍລິເວນພູເຂົາເພື່ອຈະອະທິຖານ ແລະພະອົງຊົງອະທິ ຖານຕໍ່ພະເຈົ້າຕະຫລອດຄືນ ເມື່ອເຖິງເວລາເຊົ້າ ພະອົງຊົງເອີ້ນສາວົກເຂົ້າມາຫາພະອົງ ແລະຊົງເລືອກສິບ ສອງຄົນຈາກພວກເຂົາໄວ້ ແລະຊົງແຕ່ງຕັ້ງໃຫ້ພວກເຂົາເປັນອັກຄະສາວົກຂອງພະອົງ"(ລູກາ6:12-13)

6. ຊະນິດຂອງຄົນທີ່ພະເຢຊູຊົງເລືອກ ສາວົກຂອງພະເຢຊູນັ້ນໂດຍທົ່ວໄປເປັນຄົນທີ່ມາຈາກກຸ່ມຕ່າງໆຂອງປະ ຊາຊົນສິ່ງທີ່ພະອົງຊົງສະແຫວງຫາຄື ຈິດໃຈທີ່ພ້ອມຈະມອບຖວາຍຕົວແກ່ພະອົງຢ່າງສິ້ນເຊີງ ສິ່ງທີ່ສຳຄັນ ເໜືອອື່ນໃດໃນພະດຳລິຂອງພະເຢຊູນັ້ນ ຄືສັກກະຍະພາບຂອງສາວົກ ບໍ່ແມ່ນຄວາມສາມາດຂອງເຂົາພະ ອົງຈະເປັນຜູ້ເຮັດໃຫ້ພວກເຂົາກາຍເປັນຄົນທີ່ມີຄວາມສຳຄັນ

7. ເພດຂອງສາວົກຈະບໍ່ເປັນການດີເລີຍຖ້າເຮົາພະຍາຍາມສ້າງຄົນຊຶ່ງເປັນເພດກົງກັນຂ້າມກັບເຮົາໃຫ້ເປັນສາວົກຍົກເວັ້ນເຂົາຈະເປັນລູກຊາຍ ຫລືລູກສາວຫລືເປັນພີ່ນ້ອງຊາຍຍິງໃນຄອບຄົວດຽວກັນກັບເຮົາ ຈົ່ງມອບ ໝາຍໃຫ້ຄົນອື່ນທີ່ເປັນເພດດຽວກັນທຳການຝຶກອົບຮົມເຂົາເປັນສາວົກ

8. ການກວດສອບຄຸນສົມບັດຂອງຜູ້ທີ່ຈະເປັນສາວົກ

   ກ) ຄົນທີ່ຈະເປັນສາວົກໄດ້ຈະຕ້ອງເປັນຄຣິສຕຽນກ່ອນ ຈົ່ງນຳເຂົາໃຫ້ຮັບເຊື່ອໃນພະຄຣິດກ່ອນທີ່ຈະ ສ້າງໃຫ້ເຂົາເປັນສາວົກ ຫລືບໍ່ຢ່າງນັ້ນກໍໃຫ້ເລືອກ ຄົນທີ່ຮັບເຊື່ອແລ້ວ

   ຂ) ສາວົກຈຳເປັນຕ້ອງມີທ່າທີທີ່ຍອມຮັບຄຳສອນ ສາວົກຂອງທ່ານຕ້ອງເຕັມໃຈ ແລະກະຕືລືລົ້ນທີ່ຈະ ໄດ້ຮັບການສອນ

   ຄ) ສາວົກຂອງທ່ານຕ້ອງມີໃຈຮັກພະເຈົ້າ - ເປັນຄົນທີ່ຄວາມຕັ້ງໃຈແທ້ທີ່ຈະມີຊີວິດຢູ່ເພື່ອພະເຈົ້າຍິ່ງ ກວ່າເພື່ອຕົວເອງ

   ງ) ເຂົາຕ້ອງສາມາດທີ່ຈະຈັດ ແລະຮັກສາກຳໜົດເວລານັດໝາຍໄດ້ ຕາມທີ່ຕົກລົງກັນໄວ້

   ຈ) ເຂົາຕ້ອງມີຄວາມສັດຊື່ທີ່ຈະດຳເນີນຢູ່ໃນຂະບວນການສ້າງສາວົກ ໂປໂລບອກໃຫ້ຕີໂມທຽວມອບ ຄຳສອນໄວ້ກັບຄົນທີ່ສັດຊື່ (1ຕີໂມທຽວ2:2)

   ຖ້າທ່ານຕ້ອງການທຸ້ມເທຊີວິດໃຫ້ແກ່ໃຜຈັກຄົນນຶ່ງ ສຳຄັນຢ່າງຍິ່ງທີ່ເຂົາຈະຕ້ອງເຮັດໃນສິ່ງທີ່ໄດ້ ຮັບມອບ ໝາຍ ແລະໜ້າທີ່ຮັບຜິດຊອບໃນຂະນະທີ່ຢູ່ໃນຂະບວນການຝຶກອົບຮົມຈົນສຳເລັດສິ້ນ

9. ຈະຫາສາວົກໄດ້ຈາກບ່ອນໃດ

   ສາວົກຂອງທ່ານອາດຈະເປັນຄຣິດສຕຽນຊຶ່ງ
   ກ) ເປັນຄົນທີ່ທ່ານນຳມາຮັບເຊື່ອໃນພະຄຣິດ
   ຂ) ເປັນຄຣິສຕຽນໃໝ່ໃນຄຣິສຕະຈັກຂອງທ່ານ
   ຄ) ເປັນເພື່ອນ
   ງ) ເປັນຄົນທີ່ເຮັດວຽກຢູ່ບ່ອນດຽວກັນ
   ຈ) ເປັນເພື່ອນບ້ານ
   ສ) ເປັນເພື່ອນຮ່ວມຊັ້ນຮຽນ
   ຊ) ເປັນຄົນທີ່ອອກມາຮັບການອະທິຖານເພື່ອ ຫລືຮັບຄຳປຶກສາ

GCI

10. ຈະກະຕຸ້ນທ້າທາຍຄົນທີ່ມີສັກກະຍະພາບໃນການເປັນສາວົກໄດ້ຢ່າງໃດ

ເມື່ອທ່ານຮູ້ເຖິງນ້ຳພະໄທພະເຈົ້າໃນການເລືອກສັນສາວົກຂອງທ່ານແລ້ວ ຢ່າລີລໍທີ່ຈະໄປເວົ້າລົມກັບເຂົາເພື່ອ ແບ່ງປັນກັບເຂົາເຖິງຄວາມປະສົງຂອງທ່ານ ແຕ່ຂໍໃຫ້ສັງເກດຄຳ ແນະນຳດັ່ງຕໍ່ໄປນີ້

ປະການທຳອິດ ຈົ່ງທ້າຊວນເຂົາດ້ວຍຄວາມກະຕືລືລົ້ນໃຫ້ຮັບການຝຶກເປັນສາວົກ

ປະການທີ່ສອງ ໄປພົບເຂົາໃນເວລາທີ່ສະດວກສຳລັບເຂົາ

ປະການທີ່ສາມ ອະທິບາຍໃຫ້ເຂົາເຂົ້າໃຈຢ່າງຊັດເຈນວ່າ ຂໍ້ສະເໜີຂອງທ່ານຕ້ອງມີອັນ ໃດກ່ຽວຂ້ອງແດ່

ປະການທີ່ສີ່ຢ່າພະຍາຍາມເຮັດໃຫ້ເຂົາເຫັນວ່າ ເຂົາບໍ່ຈຳເປັນຕ້ອງທຸ້ມເທອັນໃດຫລາຍ

ປະການທີ່ຫ້າ ຈົ່ງຕຽມຕົວໃຫ້ພ້ອມກ່ອນທີ່ຈະໄປເວົ້າລົມກັບເຂົາ ວິທີການທີ່ທ່ານທ້າທາຍເຂົາ ຈະມີຜົນຕໍ່ການຕອບ ສະໜອງຂອງເຂົາ

ຂ. ຫລັກການພື້ນຖານໃນການສ້າງສາວົກ

ມີຫລັກການ 5 ປະການໃນການປະຕິສຳພັນກັບສາວົກຂອງທ່ານ

1. ຜູ້ສ້າງສາວົກຈະຕ້ອງຮັກສາວົກຂອງຕົນ

ຕໍ່ໄປນີ້ຄືວິທີການຕ່າງໆໃນການສະແດງເຖິງຄວາມຫວ່ງໃຍແລະສົນອົກສົນໃຈໃນຕົວເຂົາ
- ຕ້ອງພ້ອມທີ່ຈະຊ່ວຍສາວົກຢູ່ສະເໝີ
- ອະທິຖານເພື່ອສາວົກ
- ໂທລະສັບໄປຫາສາວົກ
- ໃຊ້ເວລາກັບສາວົກ
- ຮັບຟັງຄວາມຕ້ອງການຂອງສາວົກ
- ໃຫ້ຄວາມໝັ້ນໃຈແກ່ສາວົກ
- ເມື່ອສາວົກເຮັດບາບ ເຮົາຕ້ອງປະເຊີນໜ້າກັບເຂົາ
- ໃຫ້ຂອງຂວັນທີ່ເໝາະສົມແກ່ສາວົກ
- ທູນຂໍບັນຫາຈາກພະເຈົ້າທີ່ຈະຕອບສະໜອງຕໍ່ຄວາມຕ້ອງການຂອງສາວົກ
- ສັດຊື່ໃນການຕຽມຕົວເມື່ອຈະໃຊ້ເວລາກັບສາວົກ

2. ຜູ້ສ້າງສາວົກຈະຕ້ອງເຮັດພັນທະກິດກັບສາວົກຄົບທຸກດ້ານ (ລູກາ2:52)

ກ) ດ້ານຮ່າງກາຍ - ຊ່ວຍໃຫ້ເຂົາພັດທະນານິໄສ ມາລະຍາດ ແລະການແຕ່ງກາຍ ແບບຄຣິສຕຽນ

ຂ) ດ້ານສັງຄົມ - ປະພຶດຕົວ ສົນທະນາ ສ້າງມິດຕະພາບ ແລະທຳກິດຈະກຳຕ່າງໆ ຕາມແບບຢ່າງພະຄຣິດ

ຄ) ດ້ານຄວາມຄິດຈິດໃຈ - ການອ່ານໜັງສືຝ່າຍວິນຍານ, ການເບິ່ງໜັງຟັງເພງທີ່ເສີມສ້າງຄວາມ ຈະເລີນມີຄວາມເຊື່ອໃນແງ່ບວກ ມີທ່າທີທີ່ເຊື່ອໝັ້ນໃນຍາມທີ່ຕ້ອງປະເຊີນກັບສະຖານະການ ຕ່າງໆ

3. ຜູ້ສ້າງສາວົກຈະຕ້ອງໃຊ້ເວລາກັບຜູ້ທີ່ເປັນສາວົກ

GCI

ພະເຢຊູຜູ້ໄຖ່ຂອງຊົງ “ແຕ່ງຕັ້ງອັກຄະສາວົກສິບສອງຄົນໄວ້ ເພື່ອໃຫ້ຢູ່ກັບພະອົງ” (ມາຣະໂກ3:14) ມາຣະໂກ3:7, ມາຣະໂກ8:27, ໂຢຮັນ3:22, ໂຢຮັນ 6:3 ແລະກິດຈະການ4:13
ມີຫລາຍສິ່ງຫລາຍຢ່າງທີ່ສາມາດເຮັດຮ່ວມກັນໄດ້ເຊັ່ນ ການກິນອາຫານ ການອອກກໍາລັງກາຍ ການຊື້ ຂອງ ການໄປໂບດ ການຍ່າງ ການອະທິຖານ ການເປັນພະຍານ ການໄປຮ່ວມງານພິເສດຕ່າງໆ ຖ້າທ່ານ ເປັນຄົນໂສດ ທ່ານອາດເຮັດອາຫານຮັບປະທານດ້ວຍກັນເຮັດການ ບ້ານນໍາກັນ ຫລືອາດຈະເຊົ່າບ້ານຢູ່ ນໍາກັນກໍໄດ້ທ່ານຕ້ອງສ້າງນິໄສທີ່ຈະບໍ່ໄປບ່ອນໃດຕາມລໍາພັງແຕ່ພາສາວົກ ຂອງທ່ານໄປກັບທ່ານ ສະເໝີ

ປະໂຫຍດທີ່ສາວົກຂອງທ່ານຈະໄດ້ຮັບໃນການໃຊ້ເວລາກັບທ່ານ

ກ) ເຂົາຈະໄດ້ພົບກັບທ່ານໃນສະຖານະການໃຊ້ເວລາກັບທ່ານ
ຂ) ຄວາມເປັນນໍ້າໜຶ່ງໃນດຽວກັນຂອງທ່ານຈະພັດທະນາຂຶ້ນ
ຄ) ການຮຽນຮູ້ຈະເກີດຂຶ້ນໃນເວລາທີ່ຄົບຄ້າສະມາຄົມກັນ
ງ) ເຂົາຈະມີໃຈເປີດເຜີຍ ແລະເລົ່າຄວາມຈິງຫລາຍຂຶ້ນກ່ຽວກັບບັນຫາຕ່າງໆທີ່ ເຂົາມີຢູ່
ຈ) ມິດຕະພາບທີ່ແທ້ຈິງຈະພັດທະນາຂຶ້ນ ແທນທີ່ຈະເປັນການເຮັດພັນທະກິດຕໍ່ກັນ ຕາມໜ້າທີ່

4. ຜູ້ສ້າງສາວົກຈະຕ້ອງສະແດງຕົວຕົນທີ່ແທ້ຈິງຂອງຕົນໃຫ້ສາວົກໄດ້ເຫັນ

ຢ່າສ້າງພາບທີ່ສວຍງາມໃຫ້ເຂົາເຫັນແຕ່ພາຍນອກ ສາວົກຂອງທ່ານຕ້ອງໄດ້ເຫັນທ່ານທັງເວລາຍິນດີ ແລະ ໂສກເສົ້າ ຄືເຫັນຄວາມເປັນມະນຸດຂອງທ່ານ ອັກຄະສາວົກໂປໂລເປີດເຜີຍ ແລະຊື່ຕົງຕໍ່ສາວົກຂອງ ທ່ານ(2ໂກຣິນໂທ7:5-6) ທ່ານກ່າວໄວ້ວ່າ “ເພາະແມ່ນວ່າເມື່ອເຮົາມາເຖິງແຄ້ວນມາຊີໂດເນັຽແລ້ວ ຮ່າງ ກາຍຂອງເຮົາບໍ່ໄດ້ພັກຜ່ອນເລີຍ ເຮົາມີຄວາມລໍາບາກຢູ່ຮອບຂ້າງ ພາຍນອກມີການຕໍ່ສູ້ພາຍໃນມີຄວາມ ຢ້ານ ແຕ່ເຖິງປານນັ້ນກໍດີພະເຈົ້າຜູ້ຊົງໜູນນໍ້າໃຈຄົນທີ່ທໍ້ໃຈໄດ້ຊົງໜູນນໍ້າໃຈຂອງເຮົາໂດຍຊົງໃຫ້ຕີໂຕມາ ຫາເຮົາ”

5. ຜູ້ສ້າງສາວົກຈະຕ້ອງໃຫ້ຄໍາປຶກສາແກ່ສາວົກ
ການທີ່ຈະໃຫ້ການປຶກສາເກີດຂຶ້ນຢ່າງມີຄວາມໝາຍໄດ້ນັ້ນ ທ່ານຕ້ອງພັດທະນາຄວາມສໍາພັນທີ່ຖືກຕ້ອງ ຂຶ້ນເສັຽກ່ອນ ຊຶ່ງມັນຈະເກີດຂຶ້ນໄດ້...

ກ) ໂດຍການສະແດງຄວາມຫວ່ງໃຍເປັນສ່ວນຕົວ
ຂ) ໂດຍຍອມໃຫ້ເຂົາເຫັນຄວາມອ່ອນແອຂອງທ່ານ
ຄ) ໂດຍການເປັນເພື່ອນ ແທນທີ່ຈະເປັນ “ຄູກອດອິຊາບາງເວລາ”
ງ) ໂດຍເປັນຄົນທີ່ໜ້າເຊື່ອຖື
ຈ) ໂດຍການເປັນຜູ້ຟັງ
ສ) ໂດຍການຍອມຮັບສາວົກຕາມທີ່ເຂົາເປັນຢູ່

ການທີ່ຈະໃຫ້ການປຶກສາເກີດຂຶ້ນຢ່າງມີຄວາມໝາຍໄດ້ນັ້ນ ທ່ານຕ້ອງພັດທະນາຄວາມ ສໍາພັນທີ່ຖືກຕ້ອງ ຂຶ້ນເສັຽກ່ອນ ຊຶ່ງມັນຈະເກີດຂຶ້ນໄດ້...

ກ) ໃຊ້ພະວັດຈະນະຂອງພະເຈົ້າດ້ວຍຄວາມຮັກ (ໂຣມ15:4, 2ຕີໂມທຽວ3:16–17)
ຂ) ຢ່າເອົາຄວາມລັບຂອງເຂົາໄປເລົ່າໃຫ້ໃຜຟັງ
ຄ) ຢ່າປ່ອຍໃຫ້ຄວາມສົນໃຈຂອງທ່ານກາຍເປັນຄວາມຢາກຮູ້ຢາກເຫັນ
ງ) ຢ່າຟັງລາຍລະອຽດເລື່ອງທີ່ເຂົາເຮັດບາບ ຫລືບັນຫາຕ່າງໆ

ຄ. ການພົບປະກັບສາວົກຂອງທ່ານ

GCI

ທ່ານຄວນຈະຈັດ ແລະກຳນົດເວລາທີ່ແນ່ນອນໄວ້ເພື່ອພົບປະແລະເສີມສ້າງສາວົກ ເມື່ອທ່ານພົບປະກັບສາວົກນັ້ນ ເຮົາຂໍແນະນຳໃຫ້ທ່ານວາງແຜນທີ່ຈະເຮັດດັ່ງຕໍ່ໄປນີ້

1. ໃຊ້ເວລາໃນການອະທິຖານຮ່ວມກັບເຂົາ ໜູນໃຈໃຫ້ເຂົາສົນທະນາກັບພະເຈົ້າຢ່າງເປັນທຳມະຊາດ ເໝືອນ ລົມກັບເພື່ອນ
2. ໃຊ້ເວລາອະທິບາຍກັນລົມກັນເຖິງເລື່ອງເຫດການທີ່ຜ່ານມາໃນອາທິດທີ່ແລ້ວ ທັງເລື່ອງທີ່ເຂົາປະສົບໄຊຊະນະ ແລະເລື່ອງທີ່ເຂົາພ່າຍແພ້ໃຊ້ເວລາຢ່າງເໝາະ ສົມໃນການເຮັດພັນທະກິດ ກັບເຂົາໃນບັນຫາໄດ້ພົບ ຊ່ວງນີ້ອາດຈະກິນເວລາທີ່ເຫລືອຈົນໝົດ ແຕ່ກໍຄົງບໍ່ເປັນຢ່າງນັ້ນທຸກຄັ້ງໄປ ຈົນບໍ່ມີ ເວລາທີ່ຈະຮຽນພະຄຳພີດ້ວຍກັນ
3. ໃຊ້ເວລາສຶກສາບົດຮຽນ ຄວນຈະມີການນຳເຂົາສຶກສາບົດຮຽນພະຄຳພີເພື່ອໃຫ້ບັນລຸເປົ້າ ໝາຍດັ່ງທີ່ກ່າວ ໄປແລ້ວເພື່ອໃຫ້ໜູນໃຈໃຫ້ສາວົກ
    - ກ) ມີບຸກຄະລິກລັກສະນະເໝືອນຢ່າງພະຄຣິດ
    - ຂ) ມີໃຈເພິ່ງພາໃນພະຄຣິດ
    - ຄ) ເລີກເພິ່ງພາຄົນອື່ນ
    - ງ) ມີຊີວິດທີ່ຄົງເສັ້ນຄົງວາ
4. ປິດທ້າຍດ້ວຍການອະທິຖານໃນສິ່ງທີ່ໄດ້ສົນທະນາໄປແລ້ວ ເມື່ອອະທິຖານ ທ່ານສາມາດຢໍ້າເຖິງສິ່ງຕ່າງໆ ທີ່ໄດ້ເວົ້າລົມກັນໄປແລ້ວນັ້ນ ໃຫ້ທ່ານແຍກຈາກສາວົກດ້ວຍອົນຍານແຫ່ງຄວາມຊື່ນຊົມຍິນດີ ແລະປ່ຽນໄປ ດ້ວຍຄວາມເຊື່ອສຳລັບອະນາຄົດບໍ່ແມ່ນດ້ວຍຄວາມຮູ້ສຶກໜັກອຶ້ງດ້ວຍພາລະບັນຫາ

ງ. ການກະຕຸ້ນສາວົກຂອງທ່ານ

ຜູ້ເຊື່ອໃຫມ່ມັກຈະມີຄວາມກະຕືລືລົ້ນແຕ່ຫລາຍຄັ້ງມັກຈະພາດເປົ້າໝາຍ ເຮົາຈະເຮັດຢ່າງໃດຈຶ່ງຈະກະຕຸ້ນໜູນ ໃຈໃຫ້ເຂົາຍັງຄົງດຳເນີນໄປສູ່ຄວາມນະເລີນໃນພະເຈົ້າຢູ່ສະເໝີໄປຢ່າງບັນລຸຈຸດປະສົງ?

1. ກະຕຸ້ນພວກເຂົາໂດຍການສະແດງຄວາມຮັກຢ່າງບໍ່ມີເງື່ອນໄຂ ພະເຢຊູບໍ່ໄດ້ມອບໝາຍໜ້າທີ່ຮ້ອຍແປດພັນ ເກົ້າໃຫ້ສາວົກໄວ້ເຮັດຕາມ ແຕ່ພະອົງຊົງເລົ້າໃຈພວກສາວົກໂດຍການ

    ປົນນິບັດພວກເຂົາ (໋ໂຢຮັນ 13:1-5)
    ຕຽມສະຖານທີ່ໄວ້ໃຫ້ເຂົາ (ໂຢຮັນ14:1-3)
    ສັນຍາວ່າພະວິນຍານບໍລິສຸດຈະມາສະຖິດຢູ່ກັບພວກເຂົາສະເໝີໄປ (ໂຢຮັນ 14:17)
    ຈະຊົງປົກປ້ອງພວກເຂົາດ້ວຍຄວາມຮັກໃນຍາມທີ່ຕ້ອງຝ່າຟັນອັນຕະລາຍ (ໂຢຮັນ15:18, 16:4)

2. ກະຕຸ້ນພວກເຂົາໂດຍການໜູນໃຈເຂົາໃຫ້ມີຊີວິດທີ່ນຶກເຖິງພະເຈົ້າຫລາຍຂຶ້ນ

    ທ່ານຈົ່ງເຕືອນສະຕິກັນແລະກັນທຸກວັນ ເຮັບເລີ 3:13
    ດັ່ງບິດາກະທຳຕໍ່ບຸດ 1ເທຊະໂລນິກ 2:11
    ເຫດສະນັ້ນຈົ່ງໜູນໃຈກັນແລະຕ່າງຄົນຕ່າງຈົ່ງກໍ່ກັນຂຶ້ນ 1ເທຊະໂລນິກ5:11
    ຂ້າພະເຈົ້າສູ້ອຸດສາພຽງໃດ ເພື່ອທ່ານຈະໄດ້ຮັບຄວາມຊູໃຈ ແລະເຂົ້າຕິດສະໜິດກັນໃນຄວາມຮັກ ໂກໂລຊາຍ 2:1-2

    - ກ) ໃຫ້ຄຳໜູນຈິດຊູໃຈແກ່ເຂົາ
      ບອກໃຫ້ເຂົາຮູ້ວ່າທ່ານຮູ້ສຶກປະທັບໃຈໃນຕົວເຂົາ
      ບອກໃຫ້ເຂົາຮູ້ວ່າເຂົາເຮັດໃຫ້ທ່ານມີຄວາມຊື່ນຊົມຍິນດີ
      ຄອຍສັງເກດຄວາມຈະເລີນເຕີບໃຫຍ່ຂອງເຂົາໃນພະຄຣິດ
      ບອກເຖິງລັກສະນະໃນທາງບວກທີ່ຄົນອື່ນໆເຫັນໃນຕົວເຂົາ
      ບອກໃຫ້ເຂົາຮູ້ວ່າເຂົາໄດ້ມີສ່ວນປົນນິບັດທ່ານຢ່າງໃດແດ່
    - ຂ) ຂຽນບັນທຶກ ຫລືໂນດສະແດງຄວາມປະທັບໃຈສົ່ງໃຫ້ເຂົາ
    - ຄ) ໃຫ້ເຂົາໄດ້ຍິນທ່ານເອີ່ຍຊື່ຂອງເຂົາໃນການອະທິຖານແລະຂອບຄຸນພະເຈົ້າສຳລັບເຂົາ
    - ງ) ສະແດງຄວາມຮູ້ສຶກສົນໃຈແລະກະຕືລືລົ້ນໃນສິ່ງທີ່ສາວົກຂອງທ່ານກຳລັງເຮັດຢູ່

3. ກະຕຸ້ນໂດຍການທ້າທາຍໃຫ້ຄວາມເຊື່ອຂອງເຂົາຈະເລີນຂຶ້ນ
    - ກ) ມອບໜ້າທີ່ຮັບຜິດຊອບໃຫ້ເຂົາເຮັດແລະຄ່ອຍໆເພີ່ມໃຫ້ອີກເມື່ອເຂົາຈະເລີນເຕີບໃຫຍ່ຂຶ້ນ

GCI

ຂ) ຫາໜັງສືກ່ຽວກັບວິລະບູລຸດ ແລະວິລະສະຕຣີແຫ່ງຄວາມເຊື່ອໃຫ້ເຂົາອ່ານ
ຄ) ສ້າງການທ້າທາຍສ່ວນຕົວ ເພື່ອໃຫ້ເຂົາບັນລຸເປົ້າໝາຍບາງປະການ

4. ກະຕຸ້ນເຂົາໂດຍການສຳແດງເຖິງຄວາມກະຕືລືລົ້ນໃນເລື່ອງຂອງພະເຈົ້າ
5. ກະຕຸ້ນເຂົາໂດຍການດຳເນີນຊີວິດທີ່ຄົງເສັ້ນຄົງວາຂອງທ່ານເອງ
6. ກະຕຸ້ນເຂົາໂດຍເບິ່ງເຫັນສັກກະຍະພາບຂອງເຂົາ
7. ກະຕຸ້ນເຂົາໂດຍການເນັ້ນການຝຶກອົບຮົມໃນແນວປະຕິບັດ
8. ກະຕຸ້ນເຂົາໂດຍການຄອຍອະທິຖານເພື່ອສະເໝີ (ໂກໂລຊາຍ1:9-10)
9. ກະຕຸ້ນເຂົາໂດຍການນຳເຂົາເຂົ້າສູ່ພະວັດຈະນະຂອງພະເຈົ້າ

ສັງເກດໃນເພັງສັນລະເສີນ 119
ຂໍ້ 77 - ພະວັດຈະນະເປັນຄວາມປິຕິຍິນດີຂອງເຂົາ
ຂໍ້48 - ແລະເປັນສິ່ງທີ່ເຂົາຮັກ
ຂໍ້11 - ຊ່ວຍປົກປ້ອງເຂົາຈາກຄວາມບາບ
ຂໍ້24 - ເປັນທີ່ປຶກສາຂອງເຂົາ
ຂໍ້38 - ເຮັດໃຫ້ເກີດຄວາມຢຳເກງພະເຈົ້າ
ຂໍ້98 - ເພີ່ມພູນສະຕິປັນຍາ
ຂໍ້ 105 - ນຳເຂົາ
ຂໍ້165 - ເຮັດໃຫ້ເຂົາມີສັນຕິສຸກ
ຂໍ້ 104 - ແລະເຮັດໃຫ້ເຂົາມີຄວາມເຂົ້າໃຈ

ລາຍການເອກະສານອ້າງອີງ